# ດຳລັດ

## ວ່າດ້ວຍ

## ລະບອບ ປະກັນ ສັງຄົມ

## ສຳລັບ

## ຜູ້ອອກແຮງງານ ໃນ ວິສາຫະກິດ

ຈັດພິມໂດຍ

ອົງການ ປະກັນ ສັງຄົມ

ກະຊວງແຮງງານ ແລະ ສະຫວັດດີການສັງຄົມ

## ສາລະບານ


| ລດ. | ເນື້ອໃນ | ມາດຕາ | ໜ້າທີ່ |
|---|---|---|---|
| 01 | ດຳລັດວ່າດ້ວຍລະບອບປະກັນສັງຄົມ ສຳລັບ ຜູ້ອອກແຮງງານ ໃນ ວິສາຫະກິດ | | - 1 - |
| 02 | ໝວດທີ 1- ບົດບັນຍັດທົ່ວໄປ | 1 - 5 | 2 - 4 |
| 03 | ໝວດທີ 2- ພາລະບົດບາດ, ສິດໜ້າທີ່ ແລະ ການຈັດຕັ້ງຂອງ ອົງການ ປະກັນສັງຄົມ | 6 - 13 | 5 - 9 |
| 04 | ໝວດທີ 3- ກອງທຶນ ແລະ ເງິນສົມທົບ | 14 - 21 | 10 - 12 |
| 05 | ໝວດທີ 4- ການອຸດໜູນເພື່ອປິ່ນປົວສຸຂະພາບ | 22 - 34 | 13 - 17 |
| 06 | ໝວດທີ 5- ການອຸດໜູນ ເຈັບປ່ວຍ | 35 - 42 | 18 - 20 |
| 07 | ໝວດທີ 6- ການອຸດໜູນ ເກີດລູກ | 43 - 47 | 21 - 22 |
| 08 | ໝວດທີ 7- ອຸດໜູນ ເສຍຊີວິດ | 48 - 49 | - 23 - |
| 09 | ໝວດທີ 8- ການອຸດໜູນເຈັບປ່ວຍຍ້ອນອຸປະຕິເຫດແຮງງານ ຫລື ພະຍາດອາຊີບ | 50 - 73 | 24 - 31 |
| 10 | ໝວດທີ 9- ການອຸດໜູນ ບຳນານ | 74 - 82 | 32 - 34 |
| 11 | ໝວດທີ 10- ການອຸດໜູນ ຄອບຄົວຂອງຜູ້ເສຍຊີວິດ | 83 - 95 | 35 - 39 |
| 12 | ໝວດທີ 11- ການອຸດໜູນ ເສຍອົງຄະ | 96 - 102 | 39 -41 |
| 13 | ໝວດທີ 12- ກົດລະບຽບທົ່ວໄປ ກ່ຽວກັບ ການຄຸ້ມຄອງ ແລະ ເງິນອຸດໜູນ | 103 - 113 | 42 - 44 |
| 14 | ໝວດທີ 13- ການໄກ່ເກ່ຍ ຂໍ້ຂັດແຍ່ງ | - 114 - | - 45 - |
| 15 | ໝວດທີ 14- ບົດບັນຍັດສຸດທ້າຍ | 115 - 117 | - 46 - |

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

= = = = = ✦ = = = = =

ນາຍົກລັດຖະມົນຕີ ເລກທີ 207 /ນຍ

# ດຳລັດ

## ວ່າດ້ວຍ ລະບອບ ປະກັນສັງຄົມ ສຳລັບ ຜູ້ອອກແຮງງານໃນ ວິສາຫະກິດ

---

- ອີງຕາມ ລັດຖະທຳມະນູນ ແຫ່ງ ສປປ ລາວ ສະບັບລົງວັນທີ 14 ສິງຫາ 1991;
- ອີງຕາມກົດໝາຍວ່າດ້ວຍລັດຖະບານແຫ່ງ ສປປ ລາວ ສະບັບ ເລກທີ 05/ສພຊ, ລົງວັນທີ 8 ມີນາ 1995;
- ອີງຕາມ ກົດໝາຍແຮງງານ ສະບັບເລກທີ 02/94,ລົງວັນທີ 14 ມີນາ 1994;
- ອີງຕາມ ການສະເໜີຂອງລັດຖະມົນຕີວ່າການກະຊວງແຮງງານ ແລະ ສະຫວັດດີການສັງຄົມ ສະບັບ ເລກທີ 2697/ຮສສ,ລົງວັນທີ 19 ຕຸລາ 1999;
- ອີງຕາມການສະເໜີຂອງລັດຖະມົນຕີວ່າການກະຊວງຍຸຕິທຳ ສະບັບ ເລກທີ 481/ກຍ, ລົງວັນທີ 29 ພະຈິກ 1999.

**ນາຍົກ ລັດຖະມົນຕີ ແຫ່ງ ສປປ ລາວ ອອກດຳລັດ :**

# ໝວດທີ 1.
# ບົດບັນຍັດທົ່ວໄປ

## ມາດຕາ1. ຈຸດປະສົງ.

ດຳລັດປະກັນສັງຄົມສຳລັບຜູ້ອອກແຮງງານໃນວິສາຫະກິດ ສະບັບນີ້ ວາງອອກເພື່ອກຳນົດຫລັກການ, ລະບຽບການ, ການຈັດຕັ້ງ, ວິທີການ ແລະ ມາດຕະການຕ່າງໆ ເພື່ອຮັບປະກັນ ສິດຜົນປະໂຫຍດ ດ້ານສະຫວັດດີການສັງຄົມໃຫ້ແກ່ຜູ້ອອກແຮງງານໃນວິສາຫະກິດ, ແນໃສ່ປົວແປງຊີວິດການເປັນຢູ່ ຂອງຜູ້ອອກແຮງງານໃຫ້ດີຂຶ້ນ, ປະກອບສ່ວນເຂົ້າໃນ ການສ້າງສາພັດທະນາເສດຖະກິດ ສັງຄົມແຫ່ງຊາດ.

## ມາດຕາ 2. ການປະກັນສັງຄົມແບບ ບັງຄັບ.

ຜູ້ອອກແຮງງານ ແລະ ຜູ້ໃຊ້ແຮງງານ ຕ້ອງເຂົ້າໃນລະບອບປະກັນສັງຄົມແບບບັງຄັບແລະ ບໍ່ມີສິດສ້າງຂໍ້ຕົກລົງໃດໆຮ່ວມກັນ ເພື່ອຈະຫລີກລ້ຽງການເຂົ້າຮ່ວມໃນລະບອບ ປະກັນສັງຄົມ ແຕ່ຢ່າງໃດ.

ການສ້າງລະບອບປະກັນສັງຄົມສຳລັບຜູ້ອອກແຮງງານໃນພາກ ວິສາຫະກິດນີ້ ແມ່ນສ້າງຂຶ້ນບົນພື້ນຖານຫລັກການປະກັນໄພ ໂດຍພາຍໃຕ້ການຄ້ຳປະກັນຂອງລັດ.

ຜູ້ອອກແຮງງານ ແລະ ຜູ້ໃຊ້ແຮງງານຊຶ່ງບໍ່ຢູ່ໃນລະບອບປະກັນສັງຄົມແບບບັງຄັບ ກໍສາມາດຍື່ນຄຳຮ້ອງ ສະໝັກເຂົ້າໄດ້ ແຕ່ຕ້ອງປະຕິບັດສິດແລະພັນທະຄືກັນກັບຜູ້ທີ່ຢູ່ໃນລະບອບປະກັນສັງຄົມແບບບັງຄັບ

ສຳລັບຄົນຕ່າງດ້າວ ແລະ ຄົນຕ່າງປະເທດທີ່ເຮັດວຽກຢູ່ ສປປ ລາວ ຕ້ອງປະຕິບັດສິດ ແລະ ພັນທະຕາມດຳລັດສະບັບນີ້, ເວັ້ນເສຍແຕ່ມີສັນຍາລະຫວ່າງຊາດ ຫລື ລະບຽບການກຳນົດໄວ້ຢ່າງອື່ນ.

**ມາດຕາ 3. ຂອບເຂດການນຳໃຊ້ດຳລັດ.**

ດຳລັດ ປະກັນສັງຄົມສະບັບນີ້ ນຳໃຊ້ຕໍ່ ຜູ້ອອກແຮງງານທີ່ເຮັດວຽກໃນ ວິສາຫະກິດຂອງລັດ, ວິສາຫະກິດເອກະຊົນ, ວິສາຫະກິດຫຸ້ນສ່ວນ ໃນຂົງເຂດອຸດສາຫະກຳ, ກະສິກຳ, ບໍລິການ ແລະ ໃນກິດຈະການອື່ນໆ.

ດຳລັດສະບັບນີ້ ນຳໃຊ້ ຕໍ່ຜູ້ໃຊ້ແຮງງານທີ່ມີຜູ້ອອກແຮງງານ ແຕ່ 10 ຄົນຂຶ້ນໄປ ແລະຈະນຳໃຊ້ຕໍ່ຫົວໜ່ວຍແຮງງານທີ່ມີຜູ້ອອກແຮງງານຕ່ຳກ່ວາ 10 ຄົນໄດ້ກໍຕໍ່ເມື່ອຫົວໜ່ວຍແຮງງານນັ້ນຫາກເປັນສາຂາຂອງຫົວໜ່ວຍແຮງງານໃຫຍ່. ໃນເມື່ອຫົວໜ່ວຍແຮງງານທີ່ມີຜູ້ອອກແຮງງານ 10 ຄົນຫາກໄດ້ປະກັນຕົນມາແລ້ວ,ແຕ່ມາຮອດໄລຍະໃດໜຶ່ງຈຳນວນຜູ້ອອກແຮງງານໄດ້ຫລຸດລົງຫົວໜ່ວຍແຮງງານນັ້ນ ກໍຍັງຈະຕ້ອງຢູ່ໃນລະບອບປະກັນສັງຄົມຕາມດຳລັດສະບັບນີ້.

**ມາດຕາ 4. ຂອບເຂດທີ່ດຳລັດ ສະບັບນີ້ບໍ່ບັງຄັບໃຊ້.**

ດຳລັດສະບັບນີ້ ບໍ່ບັງຄັບໃຊ້ຕໍ່ :

- ພະນັກງານ ລັດຖະກອນ, ທະຫານ, ຕຳຫລວດ;
- ຜູ້ທີ່ເຮັດວຽກນຳສະຖານທູດ ແລະອົງການຈັດຕັ້ງສາກົນຢູ່ ສປປ ລາວ;
- ຄົນຕ່າງປະເທດທີ່ເຮັດວຽກນຳບໍລິສັດ ທີ່ມີຕາໜ່າງຢູ່ຫລາຍປະເທດ ທີ່ຕັ້ງຢູ່ ສ ປ ປ ລາວ ບໍ່ເກີນ12 ເດືອນ;
- ຜູ້ອອກແຮງງານ ລາວ ໃນບໍລິສັດ ທີ່ມີເຄືອຄ່າຍຢູ່ ຫລາຍປະເທດ ແລະໄດ້ ຖືກສົ່ງໄປເຮັດວຽກຢູ່ຕ່າງປະເທດເປັນເວລາ 12 ເດືອນຂຶ້ນໄປ;
- ນັກຮຽນ, ນັກສຶກສາມະຫາວິທະຍາໄລ, ນັກຝຶກງານດ້ານການແພດ ຫລືຜູ້ເຂົ້າອົບຮົມອື່ນໆ ທີ່ບໍ່ໄດ້ຮັບຄ່າຈ້າງຈາກຜູ້ໃຊ້ແຮງງານ.

ມາດຕາ 5. **ເປົ້າໝາຍ ທີ່ດຳລັດຄຸ້ມຄອງ.**

ດຳລັດ ສະບັບນີ້ ຄຸ້ມຄອງການອຸດໜູນຕ່າງ ໆ ດັ່ງນີ້:

1. ຄຸ້ມຄອງການເສຍຊີວິດ ເອີ້ນວ່າ: " **ອຸດໜູນ ເສຍຊີວິດ** ".
2. ຄຸ້ມຄອງການປິ່ນປົວສຸຂະພາບ ເອີ້ນວ່າ: " **ອຸດໜູນ ປິ່ນປົວ** ".
3. ຄຸ້ມຄອງເວລາເສຍກຳລັງແຮງງານຊົ່ວຄາວ ເອີ້ນວ່າ: " **ອຸດໜູນ ເຈັບປ່ວຍ** ".
4. ຄຸ້ມຄອງໃນເວລາເກີດລູກ ເອີ້ນວ່າ: " **ອຸດໜູນ ເກີດລູກ** ".
5. ຄຸ້ມຄອງການເຈັບປ່ວຍຍ້ອນອຸປະຕິເຫດແຮງງານ ຫລື ພະຍາດອາຊີບ ເອີ້ນວ່າ: " **ອຸດໜູນເຈັບປ່ວຍຍ້ອນອຸປະຕິເຫດແຮງງານ ຫລືພະຍາດອາຊີບ** ".
6. ຄຸ້ມຄອງໃນເວລາເສຍກຳລັງແຮງງານຖາວອນເອີ້ນວ່າ: " **ອຸດໜູນ ເສຍອົງຄະ** ".
7. ຄຸ້ມຄອງໃນເວລາ ເຖົ້າແກ່ ເອີ້ນວ່າ: " **ອຸດໜູນ ບຳນານ** ".
8. ຄຸ້ມຄອງຄອບຄົວ ແລະຜູ້ທີ່ໄດ້ຮັບການລ້ຽງດູຈາກຜູ້ເສຍຊີວິດ ເອີ້ນວ່າ: " **ອຸດໜູນ ຄອບຄົວຂອງຜູ້ເສຍຊີວິດ** "
9. ຄຸ້ມຄອງການລ້ຽງດູລູກຂອງຜູ້ປະກັນຕົນ ເອີ້ນວ່າ: " **ອຸດໜູນ ລູກ** "
10. ຄຸ້ມຄອງໃນເວລາບໍ່ມີວຽກເຮັດງານທຳ ເອີ້ນວ່າ: " **ອຸດໜູນວ່າງງານ** "

ການອຸດໜູນ ໃນກໍລະນີ ທີ່ບົ່ງໄວ້ໃນຂໍ້ 1 ຫາ 8 ຈະໄດ້ຮັບການຄຸ້ມຄອງ ນັບແຕ່ມື້ ຈັດຕັ້ງປະຕິບັດດຳລັດສະບັບນີ້; ສຳລັບການອຸດໜູນ ແຕ່ 9 ຫາ 10 ຈະປະຕິບັດໃນຊຸມປີຕໍ່ໜ້າ ໂດຍອີງໃສ່ ຄວາມເໝາະສົມ ກັບ ສະພາບຕົວຈິງ.

## ໝວດທີ 2.
## ພາລະ ບົດບາດ, ສິດໜ້າທີ່
## ແລະ ການຈັດຕັ້ງ ຂອງ ອົງການ ປະກັນສັງຄົມ

**ມາດຕາ 6. ພາລະບົດບາດ ຂອງອົງການປະກັນສັງຄົມ.**

ອົງການປະກັນສັງຄົມ ຂຽນເປັນຕົວອັກສອນຫຍໍ້ວ່າ " ອ ປ ສ ", ເປັນອົງການຈັດຕັ້ງມີຖານະນິຕິບຸກຄົນ ແລະ ຢູ່ພາຍໃຕ້ການຊີ້ນໍາຂອງ ລັດຖະມົນຕີ ວ່າການກະຊວງແຮງງານ ແລະ ສະຫວັດດີການສັງຄົມ, ມີລະບົບບັນຊີຂອງຕົນເອງ, ມີພາລະບົດບາດໃນການຄົ້ນຄວ້າ ແລະຈັດຕັ້ງປະຕິບັດນະໂຍບາຍຕ່າງໆ ກ່ຽວກັບການປະກັນສັງຄົມທີ່ໄດ້ກໍານົດໃນດໍາລັດນີ້.

**ມາດຕາ 7. ການຈັດຕັ້ງ ຂອງ ອົງການ ປະກັນສັງຄົມ.**

ອົງການປະກັນສັງຄົມ ປະກອບມີ :

- ສະພາບໍລິຫານ;
- ຄະນະອໍານວຍການ;
- ກົງຈັກຊ່ວຍວຽກ ອປສ.

**ມາດຕາ 8. ສະພາ ບໍລິຫານ ຂອງ ອົງການປະກັນສັງຄົມ.**

ສະພາບໍລິຫານເປັນອົງການບໍລິຫານສູງສຸດຂອງ ອປສ; ສະພາ ບໍລິຫານນີ້ ປະກອບດ້ວຍ ກໍາມະການ 11 ທ່ານ ທີ່ຕາງໜ້າໃຫ້ພາກສ່ວນຕ່າງ ໆ ດັ່ງຕໍ່ໄປນີ້ :

- ຕາງໜ້າໃຫ້ລັດຖະບານ 3 ທ່ານ ;
- ຕາງໜ້າຜູ້ໃຊ້ແຮງງານ 4 ທ່ານ ;

- ຕາງໜ້າຜູ້ອອກແຮງງານ 4 ທ່ານ ;

ສະພາບໍລິຫານ ປະກອບດ້ວຍ ປະທານ 1 ທ່ານ ແລະຮອງປະທານຈຳນວນໜຶ່ງ, ຊຶ່ງແມ່ນນາຍົກລັດຖະມົນຕີ ເປັນຜູ້ແຕ່ງຕັ້ງ ຫລື ປົດຕຳແໜ່ງ ຕາມການສະເໜີ ຂອງລັດຖະມົນຕີ ວ່າການກະຊວງແຮງງານ ແລະ ສະຫວັດດີການສັງຄົມ ສະພາບໍລິຫານ ມີອາຍຸການ 4 ປີ.

**ມາດຕາ 9. ສິດ ແລະ ໜ້າທີ່ ຂອງ ສະພາບໍລິຫານ.**

ສະພາບໍລິຫານ ມີສິດ ແລະ ໜ້າທີ່ດັ່ງຕໍ່ໄປນີ້:

1. ເປັນເສນາທິການໃຫ້ແກ່ກະຊວງແຮງງານ ແລະ ສະຫວັດດີການສັງຄົມ ໃນການພິຈາລະນາຮັບຮອງເອົາແຜນການໄລຍະສັ້ນ, ໄລຍະກາງແລະໄລຍະຍາວ ດ້ານການປະກັນສັງຄົມຕາມການສະເໜີຂອງ ຜູ້ອຳນວຍການ;
2. ເປີດກອງປະຊຸມ ຂອງສະພາບໍລິຫານ;
3. ກຳນົດອັດຕາສ່ວນເງິນສົມທົບຂອງ ຜູ້ໃຊ້ແຮງງານ, ຜູ້ອອກແຮງງານ ແລະ ຜູ້ປະກັນຕົນ ທີ່ສະໝັກໃຈ ເຂົ້າກອງທຶນປະກັນສັງຄົມ.
4. ພິຈາລະນາຕົກລົງ ການລົງທຶນ ແລະ ແບ່ງເງິນທີ່ໄດ້ມາຈາກການລົງທຶນໃສ່ແຕ່ລະກອງທຶນ;
5. ພິຈາລະນາກຳນົດອັດຕາເພີ່ມ ເງິນອຸດໜູນຕ່າງ ໆ ຕາມການສະເໜີ ຂອງຜູ້ອຳນວຍການ;
6. ສະເໜີແຕ່ງຕັ້ງຫລື ປົດຕຳແໜ່ງຜູ້ອຳນວຍການແລະຮອງຜູ້ອຳນວຍການ ຕໍ່ລັດຖະມົນຕີ ວ່າການກະຊວງແຮງງານແລະ ສະຫວັດດີການສັງຄົມ;
7. ແຕ່ງຕັ້ງ ຫລື ປົດຕຳແໜ່ງ ຫົວໜ້າແຕ່ລະພະແນກຂອງ ອປສ ຕາມການສະເໜີ ຂອງ ຜູ້ອຳນວຍການ;

8. ພິຈາລະນາຮັບຮອງລາຍຈ່າຍບໍລິຫານຂອງ ອປສ ທີ່ຜູ້ອຳນວຍການສະເໜີ;
9. ພິຈາລະນາ ຮັບຮອງເອົາຂໍ້ກຳນົດ ລະບຽບຕ່າງໆ ຕາມການສະເໜີຂອງ ຜູ້ອຳນວຍການ.

**ມາດຕາ 10. ກອງປະຊຸມ ຂອງ ສະພາບໍລິຫານ.**

ການໄຂ ກອງປະຊຸມຂອງສະພາບໍລິຫານຂຶ້ນແມ່ນເພື່ອພິຈາລະນາຕົກລົງບັນຫາຕ່າງໆ ກ່ຽວກັບກິດຈະການທົ່ວໄປຂອງ ອປສ ເຊັ່ນ: ກຳນົດເບັ້ຍປະຊຸມຂອງປະທານ ແລະກຳມະການສະພາບໍລິຫານ, ກຳນົດເງິນເດືອນຄະນະອຳນວຍການ, ກຳນົດອັດຕາເງິນສົມທົບ, ອັດຕາເງິນອຸດໜູນ ແລະ ອື່ນ ໆ.

ສະພາບໍລິຫານ ມີສິດໄຂກອງປະຊຸມໄດ້ທຸກເວລາ ຕາມຄວາມຮຽກຮ້ອງຕ້ອງການຂອງໜ້າວຽກ. ກອງປະຊຸມຈະໄຂຂຶ້ນໄດ້ ກໍ່ຕໍ່ເມື່ອມີ ກຳມະການເຂົ້າຮ່ວມເກີນກ່ວາເຄິ່ງໜຶ່ງຂອງຈຳນວນກຳມະການທັງໝົດ.

ກອງປະຊຸມ ຂອງ ສະພາບໍລິຫານ ຖືກຮຽກໂຮມໂດຍ:

- ປະທານສະພາບໍລິຫານ;

- ໃນກໍລະນີທີ່ປະທານ ຫາກບໍ່ຮຽກໂຮມກອງປະຊຸມ ຄະນະກຳມະການສະພາບໍລິຫານສາມາດຮຽກປະຊຸມໄດ້ແຕ່ຢ່າງໜ້ອຍ ຕ້ອງມີກຳມະການໜຶ່ງສ່ວນສາມ ຂອງຈຳນວນກຳມະການທັງໝົດ.

ມະຕິຂອງກອງປະຊຸມ ສະພາບໍລິຫານຈະມີຜົນສັກສິດໄດ້ກໍ່ຕໍ່ເມື່ອໄດ້ຮັບສຽງສ່ວນຫລາຍ.ໃນກໍລະນີທີ່ມີສຽງເທົ່າກັນສຽງຂອງປະທານ ເປັນສຽງຊີ້ຂາດ.

## ມາດຕາ 11. ຄະນະອໍານວຍການ ຂອງອົງການປະກັນສັງຄົມ.

ຄະນະອໍານວຍການຂອງ ອປສ ແມ່ນ ອົງກອນຄຸ້ມຄອງບໍລິຫານວຽກງານປະຈໍາວັນ ຂອງ ອປສ. ຄະນະອໍານວຍການ ຂອງ ອປສ ປະກອບດ້ວຍ ຜູ້ອໍານວຍການ ໜຶ່ງທ່ານ ແລະຮອງ ໜຶ່ງ ຫລື ສອງ ທ່ານ ຊຶ່ງ ຖືກແຕ່ງຕັ້ງ ຫລືປົດຕໍາແໜ່ງໂດຍ ລັດຖະມົນຕີວ່າການກະຊວງແຮງງານ ແລະສະຫວັດດີການສັງຄົມ ຕາມການສະເໜີ ຂອງ ສະພາບໍລິຫານ.

ໃນການຄຸ້ມຄອງບໍລິຫານ ຄະນະອໍານວຍການ ອປສ ມີກົງຈັກຊ່ວຍວຽກຂອງຕົນຊຶ່ງປະກອບດ້ວຍພະແນກຕ່າງໆຕາມຄວາມຕ້ອງການຂອງ ວຽກງານ.

## ມາດຕາ 12. ສິດ ແລະໜ້າທີ່ ຂອງຄະນະອໍານວຍການ ອົງການປະກັນສັງຄົມ.

ຄະນະອໍານວຍການ ອປສ ມີສິດ ແລະ ໜ້າທີ່ຕົ້ນຕໍດັ່ງນີ້ :

1. ເປັນເສນາທິການໃຫ້ແກ່ ສະພາບໍລິຫານໃນການວາງແຜນໄລຍະສັ້ນ, ໄລຍະກາງ ແລະ ໄລຍະຍາວ ທີ່ກ່ຽວກັບ ການປະກັນສັງຄົມ;
2. ຄຸ້ມຄອງບໍລິຫານດ້ານການເງິນ ຂອງ ອປສ;
3. ສະເໜີການເພີ່ມ ຫລື ຫລຸດອັດຕາເງິນສົມທົບແລະເງິນອຸດໜູນຕ່າງໆ,ໃຫ້ສະພາບໍລິຫານ ພິຈາລະນາ;
4. ຂຶ້ນທະບຽນ ແລະ ບັນທຶກເງິນສົມທົບ;
5. ພິຈາລະນາ ຄໍາຮ້ອງຂໍ ເງິນອຸດໜູນ ແລະ ເບີກຈ່າຍ ເງິນອຸດໜູນ;
6. ເຮັດບົດສະຫລຸບ ລາຍຮັບ ລາຍຈ່າຍ ປະຈໍາປີ ເພື່ອ ລາຍງານໃຫ້ສະພາບໍລິຫານ ແລະ ລັດຖະມົນຕີວ່າການ ກະຊວງ ແຮງງານ ແລະ ສະຫວັດດີການສັງຄົມ;

7. ປະຕິບັດ ສິດ ແລະ ໜ້າທີ່ອື່ນໆທີ່ກຳນົດໄວ້ໃນ ກົດລະບຽບຂອງ ອປສ.

**ມາດຕາ 13. ການໃຊ້ຈ່າຍບໍລິຫານ ຂອງອົງການປະກັນສັງຄົມ.**

ສະພາບໍລິຫານ ເປັນຜູ້ກຳນົດລາຍຈ່າຍດ້ານການບໍລິຫານ ຂອງອົງການປະກັນສັງຄົມ ໂດຍຫັກເອົາເງິນໃນແຕ່ລະກອງທຶນມາເປັນງົບປະມານລວມຂອງອົງການປະກັນສັງຄົມ.

ຈຳນວນເງິນທີ່ຈະໃຊ້ເຂົ້າໃນການຄຸ້ມຄອງອົງການປະກັນສັງຄົມ ສູງສຸດບໍ່ໃຫ້ເກີນ 10% ຂອງລາຍຮັບທັງໝົດຂອງອົງການປະກັນສັງຄົມ.

ສະພາບໍລິຫານຈະເປັນຜູ້ແບ່ງຈຳນວນເງິນ 10% ດັ່ງກ່າວນັ້ນອອກເປັນແຕ່ລະຮ່ວງສຳລັບການບໍລິຫານ ອົງການປະກັນສັງຄົມ, ແຕ່ຕ້ອງມີການຮັບຮອງຈາກລັດຖະມົນຕີວ່າການກະຊວງແຮງງານແລະ ສະ ຫວັດດີການສັງຄົມ.

## ໝວດທີ 3.
## ກອງທຶນ ແລະ ເງິນສົມທົບ

**ມາດຕາ 14. ກອງທຶນ ປະກັນສັງຄົມ.**

ກອງທຶນປະກັນສັງຄົມເປັນກອງທຶນທີ່ມີລັກສະນະເອກະລາດຊຶ່ງມີຈຸດປະສົງ ເພື່ອຕອບສະໜອງຄວາມຮຽກຮ້ອງຕ້ອງການດ້ານ ສະຫວັດດີການສັງຄົມ ໃຫ້ແກ່ຜູ້ອອກແຮງງານໃນວິສາຫະກິດ; ລັດ ຍົກເວັ້ນອາກອນແລະຄ່າທຳນຽມຕ່າງ ໆ.

**ມາດຕາ 15. ແຫລ່ງ ລາຍຮັບ.**

ແຫລ່ງລາຍຮັບ ກອງທຶນປະກັນສັງຄົມ ໄດ້ມາຈາກ:

1. ເງິນສົມທົບ ຂອງ ຜູ້ໃຊ້ແຮງງານແລະຜູ້ອອກແຮງງານ;
2. ເງິນສົມທົບ ຂອງ ຜູ້ປະກັນຕົນແບບ ສະໝັກໃຈ;
3. ເງິນດອກເບ້ຍ ຫລື ເງິນປັບໃໝຈາກ ການຈ່າຍເງິນສົມທົບຊ້າ ຫລື ໃນກໍລະນີທີ່ ມີການ ລະເມີດ ກົດລະບຽບ, ກົດໝາຍ;
4. ລາຍຮັບຈາກ ການລົງທຶນ.

**ມາດຕາ 16. ໂຄງປະກອບ ຂອງ ກອງທຶນ ປະກັນສັງຄົມ.**

ກອງທຶນ ປະກັນສັງຄົມ ປະກອບດວ້ຍ 4 ກອງທຶນ ດັ່ງນີ້ :

1. ກອງທຶນ ປະກັນສຸຂະພາບ;
2. ກອງທຶນ ອຸດໜູນໄລຍະສັ້ນ (ເກີດລູກ, ເຈັບປ່ວຍ, ເສຍຊີວິດ);
3. ກອງທຶນຊົດເຊີຍ ຕໍ່ການເຈັບປ່ວຍຍ້ອນອຸປະຕິເຫດແຮງງານ ຫຼື ພະຍາດອາຊີບ;
4. ກອງທຶນ ອຸດໜູນໄລຍະຍາວ ( ບຳນານ, ເສຍອົງຄະ, ຄອບຄົວ ຂອງ ຜູ້ເສຍຊີວິດ).

## ມາດຕາ 17. ເງິນສົມທົບ.

ເງິນສົມທົບ ແມ່ນເງິນທີ່ຜູ້ໃຊ້ແຮງງານ, ຜູ້ອອກແຮງງານ ແລະ ຜູ້ປະກັນຕົນແບບສະໝັກໃຈປະກອບສ່ວນເຂົ້າໃນແຕ່ລະກອງທຶນ ຂອງ ກອງທຶນປະກັນສັງຄົມ.

## ມາດຕາ 18. ອັດຕາສ່ວນ ເງິນສົມທົບ.

ເງິນສົມທົບເຂົ້າກອງທຶນປະກັນສັງຄົມ ໄດ້ມາຈາກຄ່າແຮງງານ ຫລືເງິນເດືອນ; ສະພາບໍລິຫານຈະເປັນຜູ້ກຳນົດອັດຕາສ່ວນເງິນສົມທົບ ຂອງຜູ້ໃຊ້ແຮງງານ ແລະຜູ້ອອກແຮງງານ ແຕ່ຕ້ອງໄດ້ຮັບຄວາມເຫັນດີ ຈາກລັດຖະມົນຕີວ່າການກະຊວງແຮງງານແລະ ສະຫວັດດີການສັງຄົມ.

ສຳລັບເງິນສົມທົບທັງໝົດ ຂອງ ຜູ້ອອກແຮງງານ, ສູງສຸດ ແມ່ນ ບໍ່ໃຫ້ເກີນ 50% ຂອງ ເງິນສົມທົບ ທັງໝົດ.

## ມາດຕາ 19. ເງິນສົມທົບ ເຂົ້າໃນ ກອງທຶນ ຊົດເຊີຍ.

ສະເພາະການເຈັບປ່ວຍຍ້ອນອຸປະຕິເຫດແຮງງານຫລື ພະຍາດອາຊີບ ແມ່ນຜູ້ໃຊ້ແຮງງານແຕ່ຝ່າຍດຽວເປັນຜູ້ຈ່າຍເງິນສົມທົບເຂົ້າກອງທຶນຊົດເຊີຍ.

## ມາດຕາ 20. ຂັ້ນຕອນ ການຈ່າຍ ເງິນສົມທົບ.

ທຸກໆສິ້ນເດືອນໃດ ຜູ້ໃຊ້ແຮງງານຕ້ອງຫັກເງິນເດືອນ ຫລື ຄ່າແຮງງານຂອງຜູ້ອອກແຮງງານແລະ ສ່ວນເງິນສົມທົບຂອງຕົນແລ້ວຖອກເຂົ້າກອງທຶນປະກັນສັງຄົມ ພ້ອມທັງແຈ້ງຈຳນວນພົນ ແລະຈຳນວນເງິນເດືອນທັງໝົດຂອງຜູ້ອອກແຮງງານ ໃຫ້ແກ່ອົງການປະກັນສັງຄົມຊາບ ກ່ອນ ວັນທີ 15 ຂອງ ເດືອນຕໍ່ມາ.

ຖ້າກາຍກຳນົດເວລາທີ່ໄດ້ກຳນົດໄວ້ໃນວັກເທິງນີ້,ຜູ້ໃຊ້ແຮງງານຈະຖືກ ປັບໄໝ ຕາມຂໍ້ກຳນົດ ຂອງ ອປສ.

ຜູ້ໃຊ້ແຮງງານຈະຕ້ອງ ຮັບຜິດຊອບຕໍ່ການເສຍສິດ ຂອງຜູ້ອອກແຮງງານ ຕໍ່ການອຸດໜູນ ຊຶ່ງເນື່ອງຈາກການບໍ່ປະຕິບັດພັນທະໃນການເກັບເງິນສົມທົບ.

## ມາດຕາ 21. ເງິນສົມທົບ ເພື່ອປິ່ນປົວສຸຂະພາບ ຂອງຜູ້ທີ່ໄດ້ຮັບບຳນານ, ຜູ້ເສຍອົງຄະ, ຄອບຄົວຂອງ ຜູ້ເສຍຊີວິດ.

ຜູ້ໄດ້ຮັບອຸດໜູນບຳນານ, ອຸດໜູນຄອບຄົວ ແລະ ອຸດໜູນເສຍອົງຄະຕ້ອງໄດ້ຈ່າຍເງິນສົມທົບເຂົ້າກອງທຶນປະກັນສຸຂະພາບ ໃນແຕ່ລະເດືອນເທົ່າກັບຈຳນວນເງິນທີ່ຜູ້ປະກັນຕົນທົ່ວໄປ ຈ່າຍເຂົ້າກອງທຶນດັ່ງກ່າວ. ໃນແຕ່ລະເດືອນ ອປສ ຈະເປັນຜູ້ຫັກເອົາເງິນປະກັນສຸຂະພາບດັ່ງກ່າວເຂົ້າບັນຊີ ກອງທຶນເລີຍ.

## ໝວດທີ 4.
## ການ ອຸດໜູນເພື່ອ ປິ່ນປົວ ສຸຂະພາບ

### ມາດຕາ 22. ການປິ່ນປົວສຸຂະພາບໃຫ້ແກ່ ຜູ້ປະກັນຕົນ ແລະ ຄອບຄົວຂອງຜູ້ປະກັນຕົນ.

ຜູ້ປະກັນຕົນ, ຜົວຫລືເມຍ ແລະ ລູກ ຂອງຜູ້ປະກັນຕົນ ມີສິດໄດ້ຮັບການອຸດໜູນປິ່ນປົວສຸຂະພາບ. ຖ້າແມ່ນລູກ ຕ້ອງມີອາຍຸຕ່ຳກວ່າ 18 ປີ, ຖ້າລູກ ຫາກຍັງສືບຕໍ່ຮຽນ ຢ່າງຕໍ່ເນື່ອງ ແລະ ເຕັມເວລາ ກໍຈະໄດ້ຮັບການອຸດໜູນນີ້ຈົນເຖິງອາຍຸ 25 ປີ ຫລື ຖ້າລູກຫາກພິການຈົນບໍ່ສາມາດເຄື່ອນໄຫວ ແລະ ບໍ່ສາມາດຫາລ້ຽງກຸ້ມຕົນເອງໄດ້ ຈະໄດ້ຮັບການອຸດໜູນໄປຕະຫລອດຊີວິດ.

### ມາດຕາ 23. ເງື່ອນໄຂຂອງການປະກັນຕົນ ເພື່ອປິ່ນປົວສຸຂະພາບ.

ຜູ້ປະກັນຕົນຈະໄດ້ຮັບການປິ່ນປົວສຸຂະພາບໄດ້ ກໍຕໍ່ເມື່ອຜູ້ກ່ຽວຫາກໄດ້ຈ່າຍເງິນສົມທົບເຂົ້າລັງປະກັນສັງຄົມຢ່າງໜ້ອຍສາມເດືອນຂຶ້ນໄປໃນຂອບເຂດສິບສອງເດືອນສຸດທ້າຍ.

ໃນກໍລະນີ ທີ່ຜູ້ປະກັນຕົນໄດ້ຢຸດຈ່າຍເງິນສົມທົບຍ້ອນການຈ້າງງານໄດ້ສິ້ນສຸດລົງ ຜູ້ກ່ຽວມີສິດໄດ້ຮັບການອຸດໜູນປິ່ນປົວສຸຂະພາບໄດ້ພາຍໃນກຳນົດສາມເດືອນນັບແຕ່ມື້ຢຸດຈ່າຍເງິນສົມທົບເປັນຕົ້ນໄປ.

ຖ້າການຢຸດຈ່າຍເງິນສົມທົບ ຫາກເນື່ອງມາຈາກການເຈັບປ່ວຍໃຫ້ນັບໄລຍະສາມເດືອນນັ້ນຕັ້ງແຕ່ມື້ສິ້ນສຸດການໄດ້ຮັບເງິນອຸດໜູນເຈັບປ່ວຍເປັນຕົ້ນໄປ.ກໍລະນີທີ່ຜູ້ກ່ຽວຫາກເຈັບປ່ວຍໂດຍມີອາການເຈັບໜັກ

ຕົກຢູ່ໃນຂັ້ນອັນຕະລາຍ ທີ່ໃກ້ຈະເສັຍຊີວິດ ເງື່ອນໄຂດັ່ງກ່າວຈະໄດ້ແກ່ຍາວຈົນກວ່າຈະສິ້ນສຸດໄລຍະເຈັບໜັກນັ້ນ.

## ມາດຕາ 24. ການປິ່ນປົວສຸຂະພາບ ຂອງຜູ້ຮັບບໍານານ, ຜູ້ເສຍອົງຄະ ແລະ ຄອບຄົວຂອງຜູ້ເສຍຊີວິດ.

ຜູ້ຮັບບໍານານ, ຜູ້ເສຍອົງຄະ ແລະ ຄອບຄົວຂອງຜູ້ເສຍຊີວິດທີ່ໄດ້ປະກັນສຸຂະພາບ,ຜົວຫລືເມຍແລະລູກ ຂອງຜູ້ທີ່ໄດ້ປະກັນສຸຂະພາບ ມີສິດໄດ້ຮັບການປິ່ນປົວສຸຂະພາບ ເຊັ່ນດຽວກັນກັບຜູ້ປະກັນຕົນທົ່ວໄປ ໂດຍບໍ່ຂຶ້ນກັບ ກໍານົດໄລຍະເວລາປະກັນຕົນ.

## ມາດຕາ 25. ກໍລະນີການປິ່ນປົວ.

ຜູ້ປະກັນຕົນ, ຜູ້ຮັບບໍານານ, ຜູ້ເສຍອົງຄະ ແລະ ຄອບຄົວຂອງ ຜູ້ເສຍຊີວິດມີສິດໄດ້ຮັບການປິ່ນປົວຕາມກໍລະນີດັ່ງລຸ່ມນີ້ :

1. ການກວດພະຍາດ ແລະ ປິ່ນປົວທາງແພດ;
2. ການປ້ອງກັນພະຍາດ;
3. ການຟື້ນຟູ ສະມັດຖະພາບ ຂອງຮ່າງກາຍ;
4. ການບໍລິການໃນເວລາຖືພາ ແລະ ເກີດລູກ;
5. ການປິ່ນປົວທາງແພດໃນກໍລະນີປະສົບອຸປະຕິເຫດແຮງງານຫລືພະຍາດອາຊີບ.

ການປິ່ນປົວທາງແພດຈະບໍ່ກວມເອົາອຸປະຕິເຫດ ໃນການສັນຈອນບົນທ້ອງຖະໜົນທາງລົດຍົນ (ຖ້າບໍ່ແມ່ນຍ້ອນວຽກງານ) ແລະ ການປິ່ນປົວ ຫລື ການຜ່າຕັດ ເພື່ອເສີມຄວາມງາມ.

**ມາດຕາ 26. ເງື່ອນໄຂ ຂອງ ການໃຊ້ ບໍລິການ ປິ່ນປົວມີດັ່ງນີ້ :**

ຜູ້ປະກັນຕົນ, ຜູ້ຮັບບໍານານ, ຜູ້ເສຍອົງຄະ ແລະ ຄອບຄົວຂອງ ຜູ້ເສຍຊີວິດໃນເມື່ອມີບັນຫາດ້ານສຸຂະພາບໃຫ້ໄປກວດສຸຂະພາບ ແລະ ປິ່ນປົວນໍາແພດ ຫຼື ໂຮງໝໍທີ່ ອປສ ກໍານົດ; ການກໍານົດໂຮງໝໍນີ້ຕ້ອງມີການຢັ້ງຢືນຈາກ ກະຊວງ ສາທາລະນະສຸກ.

**ມາດຕາ 27. ການປິ່ນປົວ ຢູ່ຕ່າງປະເທດ.**

ຜູ້ປະກັນຕົນ, ຜູ້ຮັບບໍານານ, ຜູ້ເສຍອົງຄະ ແລະ ຄອບຄົວ ຂອງ ຜູ້ເສຍຊີວິດ ສາມາດໃຊ້ບໍລິການປິ່ນປົວຢູ່ຕ່າງປະເທດໄດ້ກໍຕໍ່ເມື່ອຢູ່ໃນເງື່ອນໄຂ ດັ່ງລຸ່ມນີ້ :

1. ກໍລະນີສຸກເສີນ ທີ່ຜູ້ກ່ຽວກໍາລັງໄປເຮັດວຽກຢູ່ຕ່າງປະເທດ ຊຶ່ງມີຄວາມຈໍາເປັນທີ່ຈະຕ້ອງເຂົ້ານອນໂຮງໝໍຢູ່ຕ່າງປະເທດ;
2. ກໍລະນີມີ ສັນຍາສອງຝ່າຍ ລະຫວ່າງ ອປສ ແລະ ສະຖາບັນປະກັນສັງຄົມຢູ່ຕ່າງປະເທດ;
3. ກໍລະນີ ມີເຫດຜົນ ອັນຈໍາເປັນທາງການແພດ, ກໍລະນີນີ້ຕ້ອງໄດ້ຮັບການອະນຸຍາດຈາກ ອປສ ສາກ່ອນ.

**ມາດຕາ 28. ການຈ່າຍເງິນໃຫ້ແກ່ໂຮງໝໍ.**

ອປສ ຈະຈ່າຍເງິນໃຫ້ແກ່ໂຮງໝໍ ຫລື ຜູ້ໃຫ້ບໍລິການປິ່ນປົວບົນພື້ນຖານສັນຍາທີ່ໄດ້ຕົກລົງກັນ ໂດຍມີການເຫັນດີຈາກກະຊວງສາທາລະນະສຸກ. ອປສ ຈະກໍານົດການຈ່າຍເພີ່ມໃຫ້ແກ່ໂຮງໝໍ ຫລື ຜູ້ໃຫ້ບໍລິການປິ່ນປົວ ຖ້າການປິ່ນປົວຫາກມີຄ່າໃຊ້ຈ່າຍສູງກ່ວາທີ່ໄດ້ກໍານົດໄວ້.

## ມາດຕາ 29. ສັນຍາ ການຈ່າຍເງິນ ລະຫວ່າງ ອົງການປະກັນສັງຄົມ ກັບໂຮງໝໍ.

ອປສ ຈະເຮັດສັນຍາກ່ຽວກັບການຈ່າຍເງິນຄ່າບໍລິການປິ່ນປົວກັບໂຮງໝໍເປັນລາຍປີ ຫຼື ອີງຕາມຄວາມເໝາະສົມຕົວຈິງ. ຖ້າໂຮງໝໍທີ່ມີສັນຍາກັບ ອປສ ຫາກມີສັນຍາຕໍ່ກັບໂຮງໝໍອື່ນ, ການສໍາລະເງິນລະຫວ່າງໂຮງໝໍ ເຫຼົ່ານີ້ໃຫ້ອີງໃສ່ການຕົກລົງ ລະຫວ່າງ ຄູ່ສັນຍາເອງ.

## ມາດຕາ 30. ການຈ່າຍເພີ່ມ ຂອງ ຜູ້ປະກັນຕົນ.

ຜູ້ປະກັນຕົນຈະຕ້ອງຮັບຜິດຊອບຄ່າໃຊ້ຈ່າຍເພີ່ມ ສໍາລັບຄ່າບໍລິການປິ່ນປົວຕ່າງໆ ທີ່ເກີນກວ່າລາຍການບໍລິການປິ່ນປົວ ທີ່ ອປສ ໄດ້ກໍານົດໄວ້.

## ມາດຕາ 31. ການທົດແທນຄືນໃນກໍລະນີ ປິ່ນປົວສຸກເສີນ.

ໃນກໍລະນີສຸກເສີນ, ຜູ້ປະກັນຕົນ, ຜູ້ຮັບບໍານານ, ຜູ້ເສຍອົງຄະ ແລະ ຄອບຄົວຂອງຜູ້ເສຍຊີວິດສາມາດເຂົ້າໃຊ້ການບໍລິການປິ່ນປົວກັບໂຮງໝໍທີ່ໃກ້ຄຽງ ແລະ ເໝາະສົມໄດ້ແຕ່ຕ້ອງລາຍງານໃຫ້ໂຮງໝໍທີ່ຕົນໄດ້ເລືອກໄວ້ ພາຍໃນເວລາ 72 ຊົ່ວໂມງ.

ໂຮງໝໍທີ່ຜູ້ປະກັນຕົນໄດ້ເລືອກໄວ້ ຈະເປັນຜູ້ຈ່າຍທົດແທນຄືນຄ່າບໍລິການປິ່ນປົວດັ່ງກ່າວ.

## ມາດຕາ 32. ການເລືອກ ແລະ ການປ່ຽນໂຮງໝໍ ຫລື ຜູ້ໃຫ້ບໍລິການປິ່ນປົວ.

ຜູ້ປະກັນຕົນ, ຜູ້ຮັບບໍານານ, ຜູ້ເສຍອົງຄະ ແລະ ຄອບຄົວຂອງຜູ້ເສຍຊີວິດ ຈະເປັນຜູ້ເລືອກໂຮງໝໍໃດໜຶ່ງ ແລະ ຂຶ້ນທະບຽນໄວ້ເພື່ອໃຊ້

ບໍລິການປິ່ນປົວໃນເວລາທີ່ຕົນເຈັບປ່ວຍ ຫລືຖືກອຸປະຕິເຫດ. ໃນກໍລະນີ ທີ່ພວກກ່ຽວຫາກຖືກອຸປະຕິເຫດ, ເຈັບປ່ວຍແຕ່ພັດບໍ່ໄດ້ໃຊ້ບໍລິການນໍາ ຫລື ບໍ່ໄດ້ລາຍງານໃຫ້ໂຮງໝໍທີ່ຕົນໄດ້ຄັດເລືອກນັ້ນກ່ອນ, ການໃຊ້ຈ່າຍ ຄ່າບໍລິການທັງໝົດແມ່ນພາລະຂອງຜູ້ກ່ຽວເອງ.

ພາຍຫລັງທີ່ມີການເລືອກໂຮງໝໍໄດ້ 12 ເດືອນ ພວກກ່ຽວສາມາດປ່ຽນໂຮງໝໍທີ່ຕົນເລືອກໄດ້ ໂດຍຍື່ນຄໍາຮ້ອງເຖິງ ອປສ ເພື່ອພິຈາລະນາ. ໃນເມື່ອພວກກ່ຽວໄດ້ມີການປ່ຽນໂຮງໝໍແລ້ວ ບັນດາໂຮງໝໍເກົ່ານັ້ນຕ້ອງປະກອບສໍານວນເອກະສານ ແລ້ວ ສົ່ງໃຫ້ໂຮງໝໍໃໝ່ ທີ່ ຜູ້ກ່ຽວເລືອກໃໝ່.

## ມາດຕາ 33. ບັນຊີ ອຸປະກອນການແພດ ແລະ ການຢາ.

ບັນຊີຢາ, ອຸປະກອນອົງຄະທຽມ, ອຸປະກອນການແພດ ແລະເຄື່ອງໃຊ້ອື່ນໆທີ່ຈະໃຊ້ໃນການປິ່ນປົວ ຫລື ຟື້ນຟູສຸຂະພາບຕ້ອງຢູ່ບົນພື້ນຖານການກໍານົດ ແລະ ຮັບຮອງຈາກກະຊວງສາທາລະນະສຸກ. ອປສ ຈະບໍ່ຮັບພິຈາລະນາກໍລະນີທີ່ຢາແລະ ອຸປະກອນການແພດ ທີ່ບໍ່ມີໃນບັນຊີຕາມກໍານົດ .

ອປສ ຈະອະນຸຍາດໃຫ້ນໍາໃຊ້ຢາ ແລະ ອຸປະກອນການແພດທີ່ບໍ່ໄດ້ກໍານົດໄວ້ໃນບັນຊີຢາ ຂອງກະຊວງສາທາລະນະສຸກໄດ້ກໍຕໍ່ເມື່ອວ່າຢາ ແລະ ອຸປະກອນທີ່ໄດ້ກໍານົດໄວ້ນັ້ນຫາກບໍ່ມີ ຫລື ໃຊ້ການ ບໍ່ໄດ້.

## ມາດຕາ 34. ການກວດກາ ຄຸນນະພາບ ຂອງການໃຫ້ບໍລິການ ປິ່ນປົວ ໃນໂຮງໝໍ.

ໜ່ວຍງານ ກວດກາຄຸນນະພາບ ຂອງ ອປສ ເປັນ ຜູ້ດໍາເນີນການກວດກາ ເປັນ ປະຈໍາ ກ່ຽວກັບການບໍລິການປິ່ນປົວໃຫ້ແກ່ ຜູ້ປະກັນຕົນ. ໃນແຕ່ລະປີໜ່ວຍງານກວດກາ ຄຸນນະພາບ ຕ້ອງ ລາຍງານໃຫ້ແກ່ ສະພາບໍລິຫານ ຂອງ ອປສ.

# ໝວດທີ 5.
# ການອຸດໜູນເຈັບປ່ວຍ

### ມາດຕາ 35. ເງື່ອນໄຂໃນການອຸດໜູນ.

ຜູ້ປະກັນຕົນທີ່ໄດ້ພັກວຽກຊົ່ວຄາວ ຍ້ອນການເຈັບປ່ວຍ ຂອງຜູ້ກ່ຽວເອງ ຫລື ປະສົບອຸປະຕິເຫດທີ່ບໍ່ແມ່ນຍ້ອນວຽກງານ ມີສິດໄດ້ຮັບການອຸດໜູນເຈັບປ່ວຍ; ຖ້າການເຈັບປ່ວຍ ຫລື ອຸປະຕິເຫດດັ່ງກ່າວຫາກເຮັດໃຫ້ຜູ້ປະກັນຕົນເຮັດວຽກບໍ່ໄດ້ເຕັມເວລາ, ອປສ ຈະທົດແທນຄືນສ່ວນເງິນຜິດດ່ຽງລະຫວ່າງເງິນເດືອນໃນໄລຍະທີ່ເຮັດວຽກໄດ້ເຕັມເວລາ ແລະໄລຍະທີ່ເຮັດບໍ່ໄດ້ເຕັມເວລາ.

### ມາດຕາ 36. ການອຸດໜູນເພີ້ມເຕີມ ໃນເວລາເຈັບປ່ວຍ.

ຜູ້ປະກັນຕົນທີ່ຖືກຫ້າມບໍ່ໃຫ້ເຮັດວຽກ ຍ້ອນສຸຂະພາບ ຫລື ພະຍາດຕິດແປດ ແມ່ນມີສິດໄດ້ຮັບການ ອຸດໜູນເຈັບປ່ວຍ.

ສຳລັບ ຜູ້ປະກັນຕົນເພດຍິງທີ່ບໍ່ສາມາດເຮັດວຽກໃນເວລາຖືພາ ຫລືພາຍຫລັງເກີດລູກ 6 ເດືອນ, ໃຫ້ປະຕິບັດຄືກັນກັບການອຸດໜູນເຈັບປ່ວຍຕາມມາດຕາ 37 ຂອງດຳລັດນີ້.

### ມາດຕາ 37. ກຳນົດ ເວລາການປະກັນຕົນ ສຳລັບ ການອຸດໜູນເຈັບປ່ວຍ.

ຜູ້ປະກັນຕົນຈະໄດ້ຮັບອຸດໜູນ ໃນກໍລະນີເຈັບປ່ວຍ ກໍຕໍ່ເມື່ອຜູ້ກ່ຽວໄດ້ຖອກເງິນເຂົ້າກອງທຶນ ປະກັນສັງຄົມ ຢ່າງຕ່ຳສຸດ 3 ເດືອນໃນໄລຍະ 12 ເດືອນສຸດທ້າຍ.

ໃນກໍລະນີທີ່ຜູ້ປະກັນຕົນໄດ້ປ່ຽນວຽກ, ການກຳນົດເວລາປະກັນຕົນແມ່ນໃຫ້ນັບແຕ່ເວລາຜູ້ກ່ຽວເຮັດວຽກກັບຜູ້ໃຊ້ແຮງງານຄົນເກົ່າ ແລະ ຄົນໃໝ່ລວມເຂົ້າກັນ.

## ມາດຕາ 38. ການຄິດໄລ່ເງິນອຸດໜູນເຈັບປ່ວຍ.

ຜູ້ໃຊ້ແຮງງານ ຕ້ອງຈ່າຍເງິນອຸດໜູນເຈັບປ່ວຍໃຫ້ຜູ້ປະກັນຕົນໃນກຳນົດ 30 ວັນ ຕາມມາດຕາ 29 ຂອງກົດໝາຍແຮງງານ. ຫລັງຈາກນັ້ນ ອປສ ຈະຈ່າຍເທົ່າກັບ 60% ຂອງເງິນເດືອນຫລື ຄ່າແຮງງານທີ່ໄດ້ປະກັນຕົນ ແລະ ສະເລ່ຍໃນໄລຍະ 6 ເດືອນ ກ່ອນຜູ້ກ່ຽວພັກວຽກເພື່ອເປັນບ່ອນອີງໃນການຄິດໄລ່ ໂດຍອີງຕາມການກຳນົດຂອງ ອປສ.

## ມາດຕາ 39. ການກັບຄືນເຮັດວຽກ ໂດຍ ບໍ່ປົກກະຕິ.

ໃນກໍລະນີທີ່ຜູ້ເຈັບປ່ວຍຫາກມີສຸຂະພາບດີຂຶ້ນ ແລະ ສາມາດກັບຄືນເຮັດວຽກໄດ້ ແຕ່ການເຮັດວຽກອາດຈະບໍ່ຄືເກົ່າ ຍ້ອນສຸຂະພາບບໍ່ທັນດີປົກກະຕິ, ຜູ້ກ່ຽວກໍຈະໄດ້ຮັບການອຸດໜູນເທົ່າກັບ 60% ຂອງຄ່າຜິດດ່ຽງລະຫວ່າງເງິນເດືອນທີ່ໄດ້ປະກັນຕົນເດືອນເກົ່າ ແລະ ເດືອນໃໝ່.

ຜູ້ໃຊ້ແຮງງານມີຄວາມຮັບຜິດຊອບ ຊອກວຽກໃດໜຶ່ງທີ່ເໝາະກັບສຸຂະພາບຂອງຜູ້ກ່ຽວ ເພື່ອເຮັດວຽກຊົ່ວຄາວ, ຖ້າວ່າຜູ້ອອກແຮງງານຫາກປະຕິເສດວຽກດັ່ງກ່າວ ໂດຍບໍ່ມີເຫດຜົນພຽງພໍ, ການອຸດໜູນຈະຖືກຢຸດຈ່າຍໂດຍທັນທີ. ຖ້າວ່າ ອປສ ຫາກປະເມີນເຫັນວ່າຜູ້ກ່ຽວສາມາດກັບຄືນເຮັດວຽກໄດ້, ແຕ່ຜູ້ໃຊ້ແຮງງານຫາກປະຕິເສດ ໂດຍບໍ່ມີ ເຫດຜົນພຽງພໍ, ອປສ ຈະຮຽກເກັບເອົາເງິນອຸດໜູນເຈັບປ່ວຍທີ່ໄດ້ຈ່າຍໃຫ້ ຜູ້ປະກັນຕົນຈາກ ຜູ້ໃຊ້ແຮງງານ.

## ມາດຕາ 40. ກຳນົດ ເວລາ ຂອງ ການອຸດໜູນເຈັບປ່ວຍ.

ການອຸດໜູນເຈັບປ່ວຍມີກຳນົດເວລາ 1ປີ; ຖ້າຄົບ1ປີແລ້ວເຫັນວ່າສຸຂະພາບຂອງຜູ້ກ່ຽວຈະດີຂຶ້ນເປັນປົກກະຕິ ອປສ ຈະສືບຕໍ່ໃຫ້ເງິນອຸດໜູນເຈັບປ່ວຍໂດຍສູງສຸດບໍ່ໃຫ້ເກີນ 6 ເດືອນ. ແຕ່ກົງກັນຂ້າມ ຖ້າຄົບ 1 ປີແລ້ວ ຫາກຍັງເຫັນວ່າສຸຂະພາບຂອງຜູ້ກ່ຽວບໍ່ສາມາດດີເປັນປົກກະຕິໄດ້ ອປສ ຈະຄິດໄລ່ເງິນອຸດໜູນເສຍອົງຄະໃຫ້ຜູ້ກ່ຽວ.

## ມາດຕາ 41. ການກວດກາ ສຸຂະພາບຄືນ.

ຜູ້ປະກັນຕົນທີ່ເຈັບປ່ວຍ ຈະຕ້ອງໄດ້ມີການກວດສຸຂະພາບຄືນທຸກໆ 3 ເດືອນ. ເມື່ອໄດ້ຮັບກວດສຸຂະພາບແລ້ວແຕ່ເຫັນວ່າຜູ້ກ່ຽວຍັງບໍ່ທັນດີປົກກະຕິ, ຖ້າມີຄວາມຈຳເປັນຕ້ອງຟື້ນຟູສຸຂະພາບຜູ້ກ່ຽວຈະຕ້ອງໄປຟື້ນຟູສຸຂະພາບຕາມລະບຽບການທີ່ ອປສ ໄດ້ກຳນົດ. ຖ້າຜູ້ກ່ຽວ ຫາກປະຕິເສດການຟື້ນຟູ ສຸຂະພາບໂດຍ ບໍ່ມີເຫດຜົນ ພຽງພໍ ອປສ ຈະຢຸດຈ່າຍເງິນອຸດໜູນ ດັ່ງກ່າວໂດຍທັນທີ.

## ມາດຕາ 42. ການແກ້ໄຂ ຂໍ້ຂັດແຍ່ງ ທາງການແພດ.

ໃນກໍລະນີ ທີ່ ອປສ ບໍ່ເຫັນພ້ອມກັບທ່ານ ໝໍທີ່ຜູ້ປະກັນຕົນໄດ້ເລືອກກ່ຽວກັບການບົ່ງມະຕິພະຍາດຫລືການວາງຢາ ແລະ ອຸປະກອນການແພດໃນການປິ່ນປົວ, ກໍຕ້ອງມີທ່ານໝໍອາວຸໂສຜູ້ທີສາມ ເພື່ອແກ້ໄຂຂໍ້ຂັດແຍ່ງດັ່ງກ່າວ.

ເມື່ອມີການແກ້ໄຂແລ້ວ, ຖ້າຫາກວ່າຜູ້ປະກັນຕົນຫາກຍັງບໍ່ເຫັນດີນຳການແກ້ໄຂຂອງທ່ານໝໍຜູ້ທີ່ສາມນັ້ນກໍຈະມີສິດອຸທອນຄືນໄດ້.

## ໝວດທີ 6.
## ການອຸດໜູນເກີດລູກ

**ມາດຕາ 43. ເງື່ອນໄຂ ໃນການອຸດໜູນ.**

ຜູ້ປະກັນຕົນເພດຍິງທີ່ພັກວຽກ ເນື່ອງຈາກການຖືພາ, ເກີດລູກ, ຫລຸລູກ ແລະ ຮັບເອົາເດັກມາລ້ຽງ, ກໍຈະໄດ້ຮັບເງິນອຸດໜູນການເກີດລູກ ຕາມລະບຽບການທີ່ ອປສ ໄດ້ກຳນົດ.

**ມາດຕາ 44. ກຳນົດເວລາປະກັນຕົນ ສຳລັບ ການອຸດໜູນ ເກີດລູກ.**

ຜູ້ປະກັນຕົນບໍ່ວ່າຈະເປັນເພດຍິງ ຫລື ເພດຊາຍຈະມີສິດໄດ້ຮັບ ເງິນອຸດໜູນເກີດລູກໄດ້ ກໍຕໍ່ເມື່ອຜູ້ກ່ຽວໄດ້ຖອກເງິນສົມທົບເຂົ້າກອງທຶນ ປະກັນສັງຄົມມາແລ້ວ 9 ເດືອນ ໃນໄລຍະ 12 ເດືອນສຸດທ້າຍ.

**ມາດຕາ 45. ວິທີການຄິດໄລ່ເງິນອຸດໜູນເກີດລູກ.**

ຜູ້ປະກັນຕົນຈະໄດ້ຮັບເງິນອຸດໜູນເກີດລູກ ເທົ່າກັບ 70% ຂອງ ເງິນເດືອນປະກັນຕົນຂອງຜູ້ກ່ຽວ, ວິທີຄິດໄລ່ແມ່ນປະຕິບັດຄືກັນກັບອຸດ ໜູນເຈັບປ່ວຍ ແລະຈະໄດ້ຮັບເງິນອຸດໜູນພຽງແຕ່ 3 ເດືອນເທົ່ານັ້ນ. ຖ້າ ກາຍ 3 ເດືອນແລ້ວ,ແຕ່ຜູ້ກ່ຽວຍັງບໍ່ສາມາດກັບຄືນເຮັດວຽກໄດ້ຍ້ອນສາ ເຫດທາງການແພດ ຜູ້ກ່ຽວຈະມີສິດໄດ້ຮັບອຸດໜູນເຈັບປ່ວຍຕາມເງື່ອນ ໄຂທີ່ໄດ້ກຳນົດໃນໝວດທີ 5 ຂອງດຳລັດສະບັບນີ້.

# ໝວດທີ 7.
# ອຸດໜູນເສຍຊີວິດ

## ມາດຕາ 48. ເງິນອຸດໜູນເສຍຊີວິດ.

ກໍລະນີທີ່ ຜູ້ປະກັນຕົນຫາກເສຍຊີວິດ, ອປສ ຈະເບີກຈ່າຍເງິນອຸດໜູນເພື່ອສົ່ງສະການເທົ່າກັບ 6 ເດືອນຂອງເງິນເດືອນປະກັນຕົນ ຂອງຜູ້ກ່ຽວ. ຖ້າແມ່ນຜົວ ຫລື ເມຍ ຂອງຜູ້ປະກັນຕົນເສຍຊີວິດຈະໄດ້ຮັບເງິນອຸດໜູນເທົ່າກັບ 3 ເດືອນ ຂອງເງິນເດືອນປະກັນຕົນຂອງຜູ້ເປັນ ຜົວ ຫລື ເມຍ. ຖ້າແມ່ນລູກຂອງຜູ້ປະກັນຕົນ ຫາກເສຍຊີວິດ ຈະໄດ້ຮັບເງິນອຸດໜູນເທົ່າກັບ 2 ເດືອນຂອງ ເງິນເດືອນປະກັນຕົນ ຂອງຜູ້ເປັນ ພໍ່ ຫລື ແມ່ ແຕ່ຕ້ອງແມ່ນລູກທີ່ຢູ່ໃນເງື່ອນໄຂ ຕາມມາດຕາ 93 ຂອງດຳລັດສະບັບນີ້.

ຜູ້ປະກັນຕົນຈະໄດ້ຮັບເງິນອຸດໜູນເສຍຊີວິດໄດ້ ກໍຕໍ່ເມື່ອ ຜູ້ກ່ຽວໄດ້ຈ່າຍເງິນສົມທົບເຂົ້າກອງທຶນປະກັນສັງຄົມມາແລ້ວ12 ເດືອນ ໃນໄລຍະ18 ເດືອນສຸດທ້າຍ. ກຳນົດເວລາດັ່ງກ່າວນີ້ຈະບໍ່ນຳໃຊ້ສຳລັບຜູ້ທີ່ກຳລັງໄດ້ຮັບການອຸດໜູນຈາກ ອປສ.

## ມາດຕາ 49. ຜູ້ທີ່ຈະໄດ້ເງິນອຸດໜູນເສຍຊີວິດ.

ອປສ ຈະເບີກຈ່າຍເງິນອຸດໜູນເສຍຊີວິດສຳລັບສົ່ງສະການ ໃຫ້ແກ່ຍາດພີ່ນ້ອງທີ່ໄດ້ຮັບຜິດຊອບຄ່າໃຊ້ຈ່າຍ ໃນການຈັດພິທີສົ່ງສະການ ຜູ້ທີ່ເສຍຊີວິດ.

# ໝວດທີ 8.
# ການອຸດໜູນເຈັບປ່ວຍ
# ຍ້ອນ ອຸປະຕິເຫດແຮງງານ ຫລື ພະຍາດອາຊີບ

## ມາດຕາ 50. ອຸປະຕິເຫດ ແຮງງານ.

ອຸປະຕິເຫດແຮງງານ ແມ່ນໄພອັນຕະລາຍຢ່າງໜຶ່ງທີ່ເກີດຂຶ້ນຊຶ່ງເຮັດໃຫ້ຜູ້ອອກແຮງງານໄດ້ ຮັບບາດເຈັບ, ພິການ, ເສຍອົງຄະ ຫລື ເສຍຊີວິດ ໃນເວລາທີ່ເຄື່ອນໄຫວ ປະຕິບັດໜ້າທີ່ວຽກງານຢູ່ສະຖານທີ່ເຮັດວຽກ,ສະຖານທີ່ພັກຜ່ອນ, ໃນຮ້ານອາຫານ ຫລື ສະຖານທີ່ອື່ນໆໃນຂອບເຂດຄວາມຮັບຜິດຊອບ ຂອງຫົວໜ່ວຍແຮງງານ ແລະ ຕາມການມອບໝາຍ ຂອງຜູ້ໃຊ້ແຮງງານ ຫລື ຜູ້ມີສິດຄຸ້ມຄອງແຮງງານແທນຜູ້ໃຊ້ແຮງງານ.

## ມາດຕາ 51. ພະຍາດອາຊີບ.

ພະຍາດທຸກຊະນິດທີ່ເກີດຂຶ້ນ ຈາກວິຊາຊີບ ອັນພາໃຫ້ມີຜົນກະທົບຕໍ່ຮ່າງກາຍ ແລະ ຈິດໃຈຂອງຜູ້ອອກແຮງງານ ຈະຖືວ່າເປັນພະຍາດອາຊີບ.

ບັນຊີ ພະຍາດອາຊີບຕ້ອງໄດ້ສອດຄ່ອງກັບສົນທິສັນຍາຂອງອົງການແຮງງານສາກົນ. ສໍາລັບຜູ້ອອກແຮງງານທີ່ຕິດພະຍາດຊຶ່ງບໍ່ມີໃນບັນຊີແຕ່ໄດ້ຮັບການຢັ້ງຢືນຈາກ ສະພາການແພດວ່າພະຍາດທີ່ເກີດຂຶ້ນນັ້ນ ແມ່ນມາຈາກ ວິຊາຊີບແທ້, ກໍຈະມີສິດທີໄດ້ຮັບການອຸດໜູນ.

### ມາດຕາ 52. ເງື່ອນໄຂ ຂອງ ການອຸດໜູນ.

ຜູ້ປະກັນຕົນທີ່ໄດ້ຮັບບາດເຈັບຍ້ອນອຸປະຕິເຫດແຮງງານ ຫລື ພະຍາດອາຊີບ ມີສິດໄດ້ຮັບການອຸດໜູນນີ້ ໂດຍບໍ່ກໍານົດເວລາປະກັນຕົນ. ແຕ່ຖ້າຜູ້ກ່ຽວຫາກມີເຈດຕະນາເຮັດໃຫ້ອຸປະຕິເຫດແຮງງານ ຫລື ພະຍາດອາຊີບເກີດຂຶ້ນ ຜູ້ກ່ຽວຈະບໍ່ມີສິດໄດ້ຮັບອຸດໜູນນີ້.

### ມາດຕາ 53. ການໄດ້ຮັບການອຸດໜູນ ໂດຍບໍ່ໄດ້ ປະກັນຕົນ.

ກໍລະນີ ຜູ້ອອກແຮງງານຊຶ່ງບໍ່ຢູ່ໃນເປົ້າໝາຍຂອງດໍາລັດສະບັບນີ້ ຫາກປະສົບອຸປະຕິເຫດແຮງງານ ຫລື ພະຍາດອາຊີບ,ຜູ້ໃຊ້ແຮງງານ ຈະຕ້ອງຮັບຜິດຊອບປະຕິບັດການອຸດໜູນຕາມດໍາລັດສະບັບນີ້ ໃຫ້ແກ່ຜູ້ອອກແຮງງານຂອງຕົນ.

### ມາດຕາ 54. ການອຸດໜູນອຸປະຕິເຫດແຮງງານ ຫລື ພະຍາດ ອາຊີບ.

ກໍລະນີຜູ້ອອກແຮງງານປະສົບອຸປະຕິເຫດແຮງງານຫລືພະຍາດອາຊີບຈະໄດ້ຮັບການອຸດໜູນດັ່ງລຸ່ມນີ້ :

1. ການອຸດໜູນ ປິ່ນປົວທາງແພດ ແລະຟື້ນຟູ ສຸຂະພາບ;
2. ການອຸດໜູນ ເສຍກໍາລັງແຮງງານຊົ່ວຄາວ;
3. ການອຸດໜູນ ຜູ້ດູແລ;
4. ການອຸດໜູນ ເສຍກໍາລັງແຮງງານຖາວອນ;
5. ການອຸດໜູນ ສິ່ງສະການ;
6. ການອຸດໜູນ ຄອບຄົວ ຂອງ ຜູ້ເສຍຊີວິດ.

### ມາດຕາ 55. ການປິ່ນປົວ ສຸຂະພາບ.

ຜູ້ອອກແຮງງານທີ່ເຈັບປ່ວຍເນື່ອງຈາກອຸປະຕິເຫດແຮງງານ ຫລື ພະຍາດອາຊີບມີສິດໃນການປິ່ນປົວສຸຂະພາບຕາມໝວດທີ 4 ຂອງດຳລັດສະບັບນີ້ ; ໃນກໍລະນີຄ່າປິ່ນປົວຫາກໄດ້ຈ່າຍຈາກແຫລ່ງອື່ນ, ອປສ ຈະເປັນຜູ້ຈ່າຍຈຳນວນເງິນທີ່ຜິດດ່ຽງ ລະຫວ່າງ ລາຍຈ່າຍຈາກແຫລ່ງອື່ນ ແລະ ຄ່າໃຊ້ຈ່າຍຕົວຈິງຂອງການປິ່ນປົວ.

### ມາດຕາ 56. ການເສຍກຳລັງແຮງງານຊົ່ວຄາວ.

ໃນໄລຍະເວລາທີ່ພັກວຽກ ອັນເນື່ອງມາຈາກການເຈັບປ່ວຍຍ້ອນອຸປະຕິເຫດແຮງງານ ຫລື ພະຍາດອາຊີບ, ຜູ້ປະກັນຕົນມີສິດໄດ້ຮັບເງິນອຸດໜູນເສຍກຳລັງແຮງງານຊົ່ວຄາວ ຈົນກ່ວາຜູ້ກ່ຽວຈະສາມາດກັບຄືນໄປເຮັດວຽກງານໄດ້.

### ມາດຕາ 57. ການຄິດໄລ່ເງິນອຸດໜູນ.

ຜູ້ໃຊ້ແຮງງານຈະຕ້ອງຈ່າຍເງິນອຸດໜູນເສຍກຳລັງແຮງງານ ຊົ່ວຄາວໃຫ້ຜູ້ປະກັນຕົນໃນຂອບເຂດ 30 ວັນ ຕາມທີ່ໄດ້ກຳນົດໄວ້ໃນ ມາດຕາ 29 ຂອງກົດໝາຍແຮງງານ. ຫລັງຈາກນັ້ນ ອປສ ຈະຈ່າຍເທົ່າກັບ 100% ຂອງເງິນເດືອນ ຫລື ຄ່າແຮງງານຂອງຜູ້ປະກັນຕົນ, ແຕ່ຈະຈ່າຍໃຫ້ ພຽງແຕ່ ໄລຍະ 6 ເດືອນ; ເມື່ອເຖິງ 6 ເດືອນແລ້ວ ຖ້າສຸຂະພາບຍັງບໍ່ທັນດີ, ເງິນອຸດໜູນດັ່ງກ່າວຈະຫລຸດລົງເທົ່າກັບ 60% ໃນໄລຍະ 18 ເດືອນ; ເມື່ອເຖິງ 18 ເດືອນແລ້ວ ອປສ ຈະປ່ຽນໃຫ້ເປັນເງິນອຸດໜູນ ເສຍກຳລັງແຮງງານຖາວອນ.

## ມາດຕາ 58. ເງິນເດືອນປະກັນຕົນ ທີ່ ເອົາມາຄິດໄລ່ເປັນ ເງິນອຸດໜູນ.

ການຄິດໄລ່ເງິນອຸດໜູນ ໃຫ້ອີງໃສ່ ລາຍຮັບສະເລ່ຍໃນໄລຍະ 6 ເດືອນສຸດທ້າຍ, ຖ້າວ່າລາຍຮັບເດືອນສຸດທ້າຍຂອງຜູ້ອອກແຮງງານຫາກ ນ້ອຍກ່ວາລາຍຮັບປົກກະຕິ ກໍໃຫ້ຖືເອົາລາຍຮັບເດືອນກ່ອນນັ້ນ ມາເປັນ ບ່ອນອີງໃນການຄິດໄລ່.

## ມາດຕາ 59. ການກັບຄືນເຮັດວຽກແບບບໍ່ເຕັມເວລາ.

ເມື່ອສິ້ນສຸດໄລຍະພັກປິ່ນປົວຖ້າເຫັນວ່າສຸຂະພາບ ຂອງຜູ້ອອກ ແຮງງານດີຂຶ້ນແຕ່ບໍ່ປົກກະຕິຄືເກົ່າ ແລະ ບໍ່ສາມາດກັບຄືນມາເຮັດໜ້າວຽກ ເກົ່າໄດ້, ຜູ້ໃຊ້ແຮງງານ ມີໜ້າທີ່ຊອກວຽກໃດໜຶ່ງທີ່ເໝາະສົມກັບສຸຂະ ພາບຂອງຜູ້ກ່ຽວໃຫ້ຜູ້ກ່ຽວເຮັດ. ຖ້າວ່າຜູ້ໃຊ້ແຮງງານຫາກປະຕິເສດ ໂດຍບໍ່ ມີເຫດຜົນພຽງພໍ ອປສ ຈະຮຽກເກັບເງິນອຸດໜູນທີ່ໄດ້ຈ່າຍໃຫ້ແກ່ຜູ້ອອກ ແຮງງານນັ້ນຈາກຜູ້ໃຊ້ແຮງງານ.ຖ້າວ່າວຽກໃໝ່ຂອງຜູ້ກ່ຽວຫາກ ແມ່ນວຽກ ທີ່ບໍ່ເຕັມເວລາ ແລະ ຄ່າແຮງງານກໍຫລຸດຈາກຄ່າແຮງງານ ເກົ່າ, ອປສ ຈະຈ່າຍໃຫ້ຜູ້ກ່ຽວ ສະເພາະຄ່າແຮງງານທີ່ຜິດດ່ຽງລະຫວ່າງຄ່າແຮງງານ ເກົ່າແລະໃໝ່.

ຖ້າວ່າ ຜູ້ອອກແຮງງານຫາກປະຕິເສດ ໂດຍບໍ່ມີເຫດຜົນພຽງພໍໃນ ການເຮັດວຽກໃໝ່ການອຸດໜູນ ກໍຈະຫລຸດລົງຕາມຄວາມເໝາະສົມ ກັບສຸ ຂະພາບຂອງຜູ້ກ່ຽວ.

## ມາດຕາ 60. ການເສຍກຳລັງແຮງງານຖາວອນ.

ຜູ້ອອກແຮງງານທີ່ບໍ່ສາມາດກັບຄືນເຮັດວຽກໄດ້ຢ່າງຖາວອນອັນ ເນື່ອງຈາກອຸປະຕິເຫດແຮງງານ ຫລື ພະຍາດອາຊີບສາມາດຍື່ນຮ້ອງຂໍ

ການອຸດໜູນເສຍກຳລັງແຮງງານຖາວອນໄດ້. ຜູ້ກ່ຽວຈະໄດ້ຮັບເງິນອຸດໜູນເສຍກຳລັງແຮງງານຖາວອນນີ້ຈົນກ່ວາຈະເຖິງກະສຽນອາຍຸບຳນານ

## ມາດຕາ 61. ໜ່ວຍງານ ປະເມີນ ປະເພດ ເສຍກຳລັງແຮງງານ.

ອປສ ຕ້ອງສ້າງຕັ້ງໜ່ວຍງານ ປະເມີນ ແລະ ຈັດປະເພດການເສຍກຳລັງແຮງງານຂອງຜູ້ອອກແຮງງານ ແລ້ວລາຍງານໃຫ້ສະພາການແພດຂອງ ອປສ ເພື່ອພິຈາລະນາຕັດສິນ. ໜ່ວຍງານນີ້ມີໜ້າທີ່ຮ່ວມມື ກັບສູນຟື້ນຟູສຸຂະພາບ ແລະ ພິຈາລະນາຊອກວຽກເຮັດງານທຳອັນເໝາະສົມໃຫ້ແກ່ຜູ້ເສຍກຳລັງແຮງງານ. ເມື່ອສະພາການແພດໄດ້ຕົກລົງ ກ່ຽວກັບປະເພດເສຍກຳລັງແຮງງານແລ້ວ, ຖ້າຜູ້ເສຍກຳລັງແຮງງານຫາກບໍ່ເຫັນດີ ກໍສາມາດ ຍື່ນຂໍອຸທອນໄດ້.

## ມາດຕາ 62. ການກວດກາປະເພດ ເສຍກຳລັງແຮງງານຄືນ.

ທຸກໆ 3 ປີໃດ, ອປສ ຈະກວດກາແລະປະເມີນປະເພດເສຍກຳລັງແຮງງານຄືນ. ໃນກໍລະນີຜູ້ເສຍກຳລັງແຮງງານຫາກເຈັບໜັກ ແລະເຫັນວ່າສຸຂະພາບຂອງຕົນ ຊຸດໂຊມລົງກ່ວາເກົ່າ ກໍສາມາດຮ້ອງຂໍໃຫ້ ອປສ ກວດກາຄືນກ່ອນກຳນົດເວລາໄດ້.

## ມາດຕາ 63. ການຄິດໄລ່ເງິນອຸດໜູນເສຍກຳລັງແຮງງານ ຖາວອນ.

ການຄິດໄລ່ເງິນອຸດໜູນເສຍກຳລັງແຮງງານຖາວອນ ໃຫ້ເອົາສ່ວນຮ້ອຍຂອງການສູນເສຍກຳລັງແຮງງານ ຄູນກັບ 67,5% ຂອງ ລາຍຮັບສະເລ່ຍ 12 ເດືອນ ກ່ອນອຸປະຕິເຫດເກີດຂຶ້ນ.

## ມາດຕາ 64. ຮູບການຈ່າຍເງິນອຸດໜູນ.

ການເບີກຈ່າຍເງິນອຸດໜູນເສຍກຳລັງແຮງງານ ແມ່ນເປັນລາຍເດືອນ; ແຕ່ຖ້າວ່າລະດັບການເສຍກຳລັງແຮງງານຫາກຕໍ່າກ່ວາ 25% ຜູ້ເສຍກຳລັງແຮງງານສາມາດຮ້ອງຂໍໃຫ້ ອປສ ຈ່າຍເປັນເງິນອຸດໜູນເທື່ອດຽວກໍໄດ້.

## ມາດຕາ 65. ການຄິດໄລ່ ແລະ ການອຸດໜູນຜູ້ດູແລ ຜູ້ເສຍກຳລັງແຮງງານ.

ໃນກໍລະນີຜູ້ເສຍກຳລັງແຮງງານ ບໍ່ສາມາດເຄື່ອນໄຫວໄປມາດ້ວຍຕົນເອງໄດ້ ອປສ ຈະໃຫ້ເງິນອຸດໜູນຜູ້ດູແລແກ່ຜູ້ທີ່ມາຮັບໃຊ້ເບິ່ງແຍງຜູ້ກ່ຽວ. ການຄິດໄລ່ເງິນອຸດໜູນນີ້ ໃຫ້ອີງຕາມຊົ່ວໂມງທີ່ຜູ້ກ່ຽວໄດ້ດູແລ ຜູ້ເສຍກຳລັງແຮງງານ ໂດຍເອົາເງິນເດືອນ ຫລື ຄ່າແຮງງານຕໍ່າສຸດ ທີ່ ລັດຖະບານໄດ້ກຳນົດເປັນບ່ອນອີງໃນການຄິດໄລ່.

## ມາດຕາ 66. ເງິນອຸດໜູນ ເສຍຊີວິດ.

ຜູ້ປະກັນຕົນທີ່ເສຍຊີວິດຍ້ອນອຸປະຕິເຫດແຮງງານ ຫລືພະຍາດອາຊີບ ອປສ ຈະຈ່າຍເງິນອຸດໜູນເພື່ອສົ່ງສະການ ໂດຍມີຈຳນວນເທົ່າກັບ 6 ເດືອນ ຂອງຄ່າແຮງງານທີ່ຜູ້ກ່ຽວໄດ້ປະກັນຕົນ.

## ມາດຕາ 67. ການອຸດໜູນຄອບຄົວ ຂອງຜູ້ເສຍຊີວິດ.

ກໍລະນີທີ່ຜູ້ອອກແຮງງານປະສົບອຸປະຕິເຫດແຮງງານ ຫລື ພະຍາດອາຊີບຈົນເສຍຊີວິດ, ຜູ້ທີ່ຢູ່ໃນການປົກຄອງຂອງຜູ້ກ່ຽວມີສິດໄດ້ຮັບເງິນອຸດໜູນຄອບຄົວຂອງຜູ້ເສຍຊີວິດ. ຖ້າຜູ້ກ່ຽວຫາກໄດ້ຮັບເງິນອຸດ

ໜູນເບື້ອງຕົ້ນ ການຈ່າຍເງິນອຸດໜູນຄອບຄົວນີ້ ໃຫ້ເລີ່ມປະຕິບັດແຕ່ມື້ສິ້ນສຸດ ເງິນອຸດໜູນເບື້ອງຕົ້ນນັ້ນ.

### ມາດຕາ 68. ຜົວ ຫລືເມຍ ຂອງຜູ້ເສຍຊີວິດ.

ຜົວ ຫລືເມຍ ຂອງ ຜູ້ເສຍຊີວິດ ທີ່ໄດ້ຈົດທະບຽນແຕ່ງດອງກ່ອນການເສຍຊີວິດ ຈະເປັນຜູ້ໄດ້ຮັບເງິນອຸດໜູນຄອບຄົວ ຂອງ ຜູ້ເສຍຊີວິດ.

### ມາດຕາ 69. ເງິນອຸດໜູນຜົວ ຫຼືເມຍຂອງຜູ້ເສຍຊີວິດ.

ຜົວ ຫລື ເມຍຂອງຜູ້ເສຍຊີວິດຈະໄດ້ຮັບອຸດໜູນຄອບຄົວຜູ້ເສຍຊີວິດໄດ້ ກໍ່ຕໍ່ເມື່ອຄົບຕາມເງື່ອນໄຂທີ່ໄດ້ລະບຸຢູ່ໃນມາດຕາ 89 ແລະ 90 ຂອງດໍາລັດສະບັບນີ້.

### ມາດຕາ 70. ເງິນອຸດໜູນລູກ ຂອງ ຜູ້ເສຍຊີວິດ.

ຜູ້ທີ່ຈະໄດ້ຮັບເງິນອຸດໜູນລູກຂອງຜູ້ເສຍຊີວິດມີ: ລູກຄີງ,ລູກນ້າ ແລະລູກລ້ຽງຂອງຜູ້ເສຍຊີວິດ.

ລູກຂອງຜູ້ເສຍຊີວິດນີ້ ຈະໄດ້ຮັບເງິນອຸດໜູນໄດ້ ກໍ່ຕໍ່ເມື່ອວ່າມີເງື່ອນໄຂຄົບຖ້ວນ ຕາມທີ່ໄດ້ກໍານົດຢູ່ໃນມາດຕາ 93 ຂອງດໍາລັດສະບັບນີ້.

### ມາດຕາ 71. ການອຸດໜູນ ພໍ່ ຫລືແມ່ ຂອງ ຜູ້ເສຍຊີວິດ.

ໃນກໍລະນີ ຜູ້ເສຍຊີວິດ ຫາກບໍ່ມີຜົວຫລືເມຍ, ພໍ່ ຫລືແມ່ ຂອງຜູ້ກ່ຽວຈະໄດ້ຮັບເງິນອຸດໜູນເສຍຊີວິດນີ້ ຖ້າຫາກວ່າຜູ້ເສຍຊີວິດເປັນຜູ້ລ້ຽງດູພໍ່ ຫລື ແມ່ນັ້ນ. ສໍາລັບເງິນອຸດໜູນນີ້ ໃຫ້ປະຕິບັດຕາມມາດຕາ 69 ຂອງດໍາລັດ ສະບັບນີ້.

## ມາດຕາ 72. ວິທີຄິດໄລ່ເງິນອຸດໜູນ.

ເງິນອຸດໜູນຄອບຄົວ ຂອງຜູ້ເສຍຊີວິດນີ້ແມ່ນຈ່າຍເປັນລາຍເດືອນ; ການຄິດໄລ່ໃຫ້ປະຕິບັດ ດັ່ງນີ້ :

- ເງິນອຸດໜູນ ຜົວ,ເມຍ, ພໍ່ຫລືແມ່ ຂອງຜູ້ເສຍຊີວິດມີຈຳນວນເທົ່າກັບ 50% ຂອງເງິນເດືອນສະເລ່ຍ 12 ເດືອນ ທີ່ຜູ້ເສຍຊີວິດໄດ້ປະກັນຕົນ.

- ເງິນອຸດໜູນລູກຂອງຜູ້ເສຍຊີວິດເທົ່າກັບຜູ້ລະ 15% ຂອງເງິນເດືອນ ສະເລ່ຍ12ເດືອນທີ່ຜູ້ເສຍຊີວິດໄດ້ປະກັນຕົນ. ໃນກໍລະນີບໍ່ມີຜົວ, ເມຍ; ຫລື ພໍ່, ແມ່ ຂອງຜູ້ເສຍຊີວິດ ລູກແຕ່ລະຄົນຈະໄດ້ຮັບເງິນອຸດໜູນເທົ່າກັບ 20%, ຖ້າມີລູກຫລາຍຄົນ ແມ່ນບໍ່ໃຫ້ເກີນ 60%;

- ຈຳນວນເງິນອຸດໜູນຄອບຄົວ ຂອງຜູ້ເສຍຊີວິດທັງໝົດສູງສຸດ ບໍ່ໃຫ້ເກີນ ເງິນອຸດໜູນ ເສຍກຳລັງແຮງງານຖາວອນ ແບບສົມບູດຖານ.

## ມາດຕາ 73. ການປ້ອງກັນ ແລະ ຟື້ນຟູສຸຂະພາບ.

ຜູ້ທີ່ເສຍກຳລັງແຮງງານຊົ່ວຄາວ ຫລື ຖາວອນຈະຕ້ອງໄດ້ຮັບການຟື້ນຟູສຸຂະພາບແລະຝຶກວິຊາຊີບ. ຖ້າຜູ້ກ່ຽວຫາກປະຕິເສດການເຂົ້າຟື້ນຟູ ແລະ ການຝຶກວິຊາຊີບດັ່ງກ່າວ ອປສ ຈະຢຸດຈ່າຍເງິນອຸດໜູນໃຫ້ຜູ້ກ່ຽວ.

## ໝວດທີ 9.

## ການອຸດໜູນບຳນານ

### ມາດຕາ 74. ອາຍຸ ບຳນານ.

ຜູ້ປະກັນຕົນທີ່ຈະໄດ້ຮັບເງິນບຳນານຕ້ອງມີອາຍຸ 60 ປີ. ກໍລະນີຈຳເປັນ ຜູ້ທີ່ມີ ອາຍຸ 55 ປີ ກໍສາມາດຮັບບຳນານໄດ້ ແຕ່ເງິນບຳນານຈະຖືກຫັກ ອອກ 0,5% ຕໍ່ເດືອນ ຕາມຈຳນວນອາຍຸທີ່ບໍ່ທັນຄົບ 60 ປີ; ສຳລັບຜູ້ທີ່ມີອາຍຸຄົບ 60 ປີ ແຕ່ຍັງສືບຕໍ່ເຮັດວຽກ ແມ່ນບໍ່ໃຫ້ເກີນອາຍຸ 65 ປີ, ກໍລະນີນີ້ ເງິນບຳນານຈະເພີ່ມຂຶ້ນເທົ່າກັບ 0,5% ຕໍ່ເດືອນ ຕາມຈຳນວນປີທີ່ເກີນອາຍຸ 60 ປີ.

### ມາດຕາ 75. ປີການ ປະກັນຕົນ.

ຜູ້ປະກັນຕົນຈະໄດ້ຮັບເງິນບຳນານ ກໍຕໍ່ເມື່ອໄດ້ຖອກເງິນສົມທົບເຂົ້າກອງທຶນປະກັນສັງຄົມຄົບ 5 ປີ. ຖ້າປີການປະກັນຕົນບໍ່ຄົບ 5 ປີ ກໍຈະໄດ້ຮັບເງິນອຸດໜູນເທື່ອດຽວ.

### ມາດຕາ 76. ບ່ອນອີງເພື່ອ ຄິດໄລ່ ເງິນບຳນານ.

ການຄິດໄລ່ເງິນບຳນານ ບົນພື້ນຖານດັ່ງລຸ່ມນີ້ :

1. ຄະແນນບຳນານ;
2. ຄ່າແຮງງານ ສະເລ່ຍ;
3. ດັດສະນີທີ່ໄດ້ກຳນົດ.

ມາດຕາ 77. ຄະແນນ ບຳນານ.

ຄະແນນບຳນານ ຂອງຜູ້ປະກັນຕົນໃນແຕ່ລະປີ ແມ່ນໄດ້ຈາກການສະເລ່ຍເງິນສົມທົບຂອງຜູ້ກ່ຽວໃນໄລຍະ 12 ເດືອນ ຫານໃຫ້ຈຳນວນເງິນສົມທົບສະເລ່ຍຂອງຜູ້ປະກັນຕົນທັງໝົດ ໃນໄລຍະເວລາດຽວກັນ. ຖ້າຜົນຫານອອກມາຫາກເປັນຕົວເລກເສດ,ຄະແນນບຳນານແມ່ນ ຈະນັບເອົາຕົວເລກຫລັງຈຸດເຖິງຕົວທີສາມ.

ກໍລະນີຜູ້ປະກັນຕົນຄ້າງຈ່າຍເງິນສົມທົບ ຍ້ອນການເຈັບປ່ວຍ ຫລື ເຫດຜົນອື່ນໆ, ກໍຈະຄິດໄລ່ຄະແນນບຳນານ ຂອງຜູ້ກ່ຽວໃຫ້ເທົ່າກັນກັບໄລຍະກ່ອນທີ່ໄດ້ຄ້າງຈ່າຍນັ້ນ.

ມາດຕາ 78. ຄະແນນບຳນານ ແບບ ນະໂຍບາຍ.

ຜູ້ປະກັນຕົນທີ່ມີອາຍຸແຕ່ 31 ປີຂຶ້ນໄປຈະໄດ້ຮັບຄະແນນບຳ ນານນະໂຍບາຍ. ຜູ້ທີ່ມີອາຍຸຕ່ຳກວ່າ 45 ປີ ລົງມາ ໃຫ້ຄິດໄລ່ຄະແນນບຳນານໂດຍເອົາອາຍຸ ຂອງຜູ້ກ່ຽວລົບດັດສະນີ 30; ຜູ້ທີ່ມີອາຍຸ 45 ປີຂຶ້ນໄປຈະໄດ້ຄະແນນບຳນານ 15 ປີ, ຄະແນນບຳນານນະໂຍບາຍ ໃນປີໜຶ່ງໆຈະເທົ່າກັບ 0,8.

ມາດຕາ 79. ປີການ ປະກັນຕົນ ແລະ ໄລຍະເວລາທີ່ຖືວ່າເປັນ ປີການປະກັນຕົນ.

ປີການປະກັນຕົນ ແມ່ນໄລຍະເວລາທີ່ໄດ້ຈ່າຍເງິນສົມທົບເຂົ້າກອງທຶນປະກັນສັງຄົມ; ໄລຍະທີ່ຖືວ່າເປັນປີການປະກັນຕົນໃຫ້ຖືເອົາໄລຍະທີ່ໄດ້ຮັບຄະແນນບຳນານຫຼືໄລຍະທີ່ໄດ້ຊື້ຄະແນນບຳນານ,ບໍ່ວ່າຈະເປັນການສົມທົບທຶນແບບບັງຄັບ ຫລືແບບສະໝັກໃຈ.

ໄລຍະເວລາທີ່ບໍ່ໄດ້ຈ່າຍເງິນສົມທົບ ແຕ່ຖືວ່າເປັນໄລຍະປະກັນຕົນມີດັ່ງນີ້ :

1. ໄລຍະທີ່ໄດ້ຮັບອຸດໜູນ ໃນກໍລະນີເຈັບເປັນ, ອຸດໜູນເກີດລູກ ຫລືເສຍກໍາລັງແຮງງານ ຊົ່ວຄາວ;
2. ໄລຍະທີ່ໄດ້ຮັບ ເງິນອຸດໜູນ ເສຍກໍາລັງແຮງງານຖາວອນ ໃນລະດັບ 60 %ຂຶ້ນໄປ;
3. ໄລຍະທີ່ໄດ້ຮັບ ເງິນອຸດໜູນ ຜູ້ດູແລ.

## ມາດຕາ 80. ຄ່າແຮງງານສະເລ່ຍ.

ຄ່າແຮງງານສະເລ່ຍແມ່ນການສະເລ່ຍລາຍຮັບຂອງ ຜູ້ປະກັນຕົນທັງໝົດໃນໄລຍະກ່ອນມີການເບີກຈ່າຍເງິນບໍານານ.ໃຫ້ປະຕິບັດການ ເບີກຈ່າຍເງິນບໍານານໂດຍອີງ ຕາມມາດຕາ 104 ຂອງດໍາລັດສະບັບນີ້.

## ມາດຕາ 81. ການຄິດໄລ່ຈໍານວນເງິນບໍານານ.

ຈໍານວນເງິນບໍານານທັງໝົດ ແມ່ນມາຈາກຄະແນນບໍານານທີ່ຜູ້ປະກັນຕົນໄດ້ຮັບ ຫລືໄດ້ຊື້ຄູນກັບຄ່າແຮງງານສະເລ່ຍຕາມມາດຕາ 80 ຂອງດໍາລັດນີ້,ແລ້ວໃຫ້ເອົາຈໍານວນຜົນທີ່ໄດ້ມາຄູນກັບ 1,5 % (ດັດສະນີທີ່ໄດ້ກໍານົດ).

## ມາດຕາ 82. ການແບ່ງປັນຜົນປະໂຫຍດ ພາຍຫລັງ ການຢ່າຮ້າງ.

ໃນກໍລະນີທີ່ຜູ້ປະກັນຕົນຫາກໄດ້ຢ່າຮ້າງ ກ່ອນທີ່ຜູ້ກ່ຽວຈະໄດ້ຮັບເງິນບໍານານ, ສິດໄດ້ຮັບເງິນແລະ ຄະແນນບໍານານຂອງຜູ້ກ່ຽວແມ່ນຈະແບ່ງປັນ ລະຫວ່າງ ຜົວແລະເມຍຝ່າຍລະເທົ່າກັນ, ແຕ່ກໍຕ້ອງແບ່ງໃນຂອບເຂດທີ່ ຜົວ-ເມຍໄດ້ຢູ່ຮ່ວມກັນ ໂດຍອີງຕາມກົດໝາຍຄອບຄົວ.

## ໝວດທີ 10.

## ການອຸດໜູນຄອບຄົວ ຂອງຜູ້ເສຍຊີວິດ

### ມາດຕາ 83. ຜູ້ທີ່ມີສິດໄດ້ຮັບເງິນອຸດໜູນຄອບຄົວຂອງຜູ້ເສຍຊີວິດ.

ຜູ້ປະກັນຕົນ ທີ່ໄດ້ຈ່າຍເງິນສົມທົບ ເຂົ້າກອງທຶນມາແລ້ວ 5 ປີ, ຫລື ຜູ້ບຳນານທາກເສຍຊີວິດ, ບັນດາສະມາຊິກຄອບຄົວຂອງຜູ້ເສຍຊີວິດທີ່ຍັງມີຊີວິດຢູ່ຈະມີສິດໄດ້ຮັບເງິນອຸດໜູນ ຄອບຄົວ ຕາມເງື່ອນໄຂທີ່ໄດ້ກຳນົດໃນ ໝວດນີ້.

### ມາດຕາ 84. ປະເພດ ການອຸດໜູນ.

ການອຸດໜູນຄົວຄອບ ຂອງຜູ້ເສຍຊີວິດໄດ້ແບ່ງເປັນ 3 ປະເພດ ດັ່ງນີ້:

1. ການອຸດໜູນເບື້ອງຕົ້ນ;
2. ການອຸດໜູນ ຜົວຫລືເມຍ;
3. ການອຸດໜູນ ລູກ.

### ມາດຕາ 85. ເປົ້າໝາຍແລະການຈ່າຍອຸດໜູນເບື້ອງຕົ້ນ.

ຜູ້ທີ່ຈະໄດ້ຮັບເງິນອຸດໜູນເບື້ອງຕົ້ນມີຄື :

1. ຜົວຫລືເມຍ ຂອງຜູ້ເສຍຊີວິດ;
2. ລູກທີ່ມີອາຍຸຕ່ຳກ່ວາ18 ປີ ຫລືຜູ້ທີ່ຍັງສືບຕໍ່ຮ່ຳຮຽນແບບເຕັມເວລາແຕ່ບໍ່ເກີນອາຍຸ 25 ປີ, ຫລື ລູກທີ່ເປັນພິການ.

ເງິນອຸດໜູນເບື້ອງຕົ້ນ ມີຈຳນວນເທົ່າກັບ 80 % ຂອງເງິນເດືອນຜູ້ປະກັນຕົນຊຶ່ງເບີກຈ່າຍເປັນລາຍເດືອນແລະມີກຳນົດສູງສຸດ12ເດືອນ.

### ມາດຕາ 86. ຂອບເຂດ ຂອງ ການຮັບ ເງິນອຸດໜູນເບື້ອງຕົ້ນ.

ຜູ້ທີ່ໄດ້ຮັບເງິນອຸດໜູນເບື້ອງຕົ້ນ ບໍ່ມີສິດໄດ້ຮັບເງິນອຸດໜູນຄອບຄົວ, ອຸດໜູນລູກຂອງຜູ້ເສຍຊີວິດ ຫລື ປະເພດການອຸດໜູນທີ່ມີລັກສະນະຄ້າຍຄືນີ້.

### ມາດຕາ 87. ອຸດໜູນ ຄອບຄົວ ຂອງ ຜູ້ເສຍຊີວິດ.

ເງິນອຸດໜູນຄອບຄົວຂອງຜູ້ເສຍຊີວິດ ຈະຈ່າຍໃຫ້ຜົວເມຍທີ່ຖືກຕ້ອງຕາມກົດໝາຍ ຫລື ວ່າເປັນຜູ້ໄດ້ຮັບການລ້ຽງດູຈາກຜູ້ເສຍຊີວິດ. ຜູ້ທີ່ຈະມີສິດຮັບເງິນອຸດໜູນປະເພດນີ້ ກໍຕ້ອງແມ່ນຜູ້ທີ່ບໍ່ມີຄວາມສາມາດອອກແຮງງານໄດ້.

### ມາດຕາ 88. ບັນດາເປົ້າໝາຍ ທີ່ມີສິດໄດ້ຮັບເງິນອຸດໜູນຄອບຄົວ.

ຜົວ ຫລື ເມຍຂອງຜູ້ເສຍຊີວິດທີ່ໄດ້ຈົດທະບຽນແຕ່ງດອງກ່ອນການເສຍຊີວິດ ຈະເປັນຜູ້ໄດ້ຮັບເງິນອຸດໜູນ ຄອບຄົວຂອງຜູ້ເສຍຊີວິດ.

### ມາດຕາ 89. ເງື່ອນໄຂແລະສິດທິຈະໄດ້ຮັບເງິນອຸດໜູນຄອບຄົວ

1. ເມຍ ຂອງ ຜູ້ເສຍຊີວິດ ທີ່ມີອາຍຸ 44 ປີຂຶ້ນໄປ;
2. ເມຍ ຂອງ ຜູ້ເສຍຊີວິດ ທີ່ເປັນຄົນພິການ ຫລືບໍ່ສາມາດອອກແຮງງານໄດ້;

3. ເມຍ ຂອງ ຜູ້ເສຍຊີວິດ ທີ່ມີລູກບໍ່ທັນ ພົ້ນກະສຽນ ໜຶ່ງ ຄົນຂຶ້ນໄປ;

4. ຜົວ ຂອງ ຜູ້ເສຍຊີວິດ ທີ່ເປັນຄົນພິການ ຫລື ບໍ່ສາມາດ ອອກແຮງງານໄດ້.

## ມາດຕາ 90. ການແຕ່ງດອງຄືນໃໝ່.

ອປສ ຈະຈ່າຍເງິນອຸດໜູນຄອບຄົວຂອງຜູ້ເສຍຊີວິດໄດ້ ກໍຕໍ່ເມື່ອ ຜູ້ກ່ຽວບໍ່ໄດ້ແຕ່ງດອງຄືນໃໝ່. ຖ້າຜູ້ກ່ຽວຫາກແຕ່ງດອງຄືນໃໝ່ແລະການ ແຕ່ງດອງຄືນໃໝ່ຫາກສິ້ນສຸດລົງ ພາຍໃນໜຶ່ງປີ,ຜູ້ກ່ຽວຈະມີສິດໄດ້ຮັບ ເງິນອຸດໜູນຄອບຄົວຈາກຜົວຫລືເມຍຄົນກ່ອນ. ກໍລະນີ ການແຕ່ງດອງ ຄືນໃໝ່ຫາກສິ້ນສຸດລົງດ້ວຍການເສຍຊີວິດ ຂອງຄູ່ຜົວເມຍໃໝ່ ເກີນໜຶ່ງປີ, ຖ້າຄູ່ຜົວເມຍໃໝ່ຫາກເປັນຜູ້ປະກັນຕົນ ຜູ້ກ່ຽວມີສິດເລືອກລະຫວ່າງເງິນ ອຸດໜູນຈາກ ຄູ່ຜົວເມຍຄົນເກົ່າແລະຄົນໃໝ່.

## ມາດຕາ 91. ການຄິດໄລ່ ເງິນອຸດໜູນ ຄອບຄົວ ຂອງ ຜູ້ເສຍ ຊີວິດ.

ກໍລະນີຜູ້ບຳນານເສຍຊີວິດ, ເງິນອຸດໜູນ ຄອບຄົວຈະເທົ່າກັບ 60% ຂອງ ເງິນບຳນານຜູ້ກ່ຽວ.

ກໍລະນີຜູ້ປະກັນຕົນຫາກເສຍຊີວິດກ່ອນ ທີ່ຈະໄດ້ຮັບບຳນານ, ເງິນອຸດໜູນຄອບຄົວຈະເທົ່າກັບ 60% ຂອງເງິນອຸດໜູນເສຍອົງຄະ ແບບສົມມຸດຖານ ຂອງຜູ້ເສຍຊີວິດ.

## ມາດຕາ 92. ການລວມເງິນອຸດໜູນຄອບຄົວຂອງ ຜູ້ເສຍຊີວິດ ກັບ ເງິນອຸດໜູນບໍານານ ແລະ ເງິນອຸດໜູນອື່ນ.

ເງິນອຸດໜູນຄອບຄົວ ຂອງຜູ້ເສຍຊີວິດສາມາດລວມເຂົ້າກັບເງິນອຸດໜູນບໍານານ ຫລື ເງິນອຸດໜູນທີ່ຄ້າຍຄືກັນນີ້, ແຕ່ສູງສຸດບໍ່ໃຫ້ເກີນ 125% ຂອງເງິນບໍານານ;

ສໍາລັບເງິນອຸດໜູນເບື້ອງຕົ້ນ ແມ່ນບໍ່ສາມາດລວມເຂົ້າກັບເງິນອຸດໜູນນີ້ໄດ້.

## ມາດຕາ 93. ຜູ້ທີ່ມີສິດໄດ້ຮັບເງິນອຸດໜູນ ລູກ ຂອງຜູ້ເສຍຊີວິດ.

ຜູ້ທີ່ມີສິດໄດ້ຮັບເງິນອຸດໜູນລູກຂອງຜູ້ເສຍຊີວິດມີ: ລູກຄີງ, ລູກນ້າ ແລະ ລູກລ້ຽງ ຂອງຜູ້ເສຍຊີວິດ.

ລູກຂອງຜູ້ເສຍຊີວິດທີ່ມີອາຍຸ 18 ປີລົງມາຈະໄດ້ຮັບເງິນອຸດໜູນລູກ. ໃນກໍລະນີລູກຂອງຜູ້ເສຍຊີວິດຫາກຍັງສືບຕໍ່ການສຶກສາຢ່າງຕໍ່ເນື່ອງ ແລະ ເຕັມເວລາຈະໄດ້ຮັບເງິນອຸດໜູນນີ້ຈົນກ່ວາຈະເຖິງອາຍຸ 25 ປີ. ຖ້າວ່າລູກຂອງຜູ້ເສຍຊີວິດຫາກເປັນຄົນພິການ ແລະ ບໍ່ສາມາດອອກແຮງງານໄດ້ ຈະໄດ້ຮັບເງິນອຸດໜູນນີ້ຕະຫລອດໄປ.

## ມາດຕາ 94. ເງິນອຸດໜູນລູກຂອງຜູ້ເສຍຊີວິດແລະເງິນອຸດໜູນອື່ນໆ.

ຜູ້ທີ່ມີສິດໄດ້ຮັບເງິນອຸດໜູນລູກ ຂອງຜູ້ເສຍຊີວິດແລ້ວຈະບໍ່ໄດ້ຮັບເງິນອຸດໜູນເບື້ອງຕົ້ນ ຫລື ເງິນອຸດໜູນອື່ນທີ່ມີລັກສະນະຄືກັນກັບອຸດໜູນລູກຂອງຜູ້ເສຍຊີວິດ.

**ມາດຕາ 95. ການຄິດໄລ່ເງິນອຸດໜູນ ລູກ ຂອງຜູ້ເສຍຊີວິດ.**

ລູກຂອງຜູ້ເສຍຊີວິດຈະໄດ້ຮັບເງິນອຸດໜູນຜູ້ລະ 20% ຂອງເງິນບຳນານຫລືເງິນເສຍອົງຄະແບບສົມບູດຖານ,ແຕ່ສູງສຸດບໍ່ໃຫ້ເກີນ 60% ຂອງຈຳນວນເງິນບຳນານ ຫລື ເງິນເສຍອົງຄະ ແບບສົມບູດຖານຂອງຜູ້ເສຍຊີວິດ.

ຈຳນວນເງິນອຸດໜູນຄອບຄົວ ແລະ ເງິນອຸດໜູນລູກຂອງຜູ້ເສຍຊີວິດສູງສຸດ ບໍ່ໃຫ້ເກີນ 80% ຂອງເງິນບຳນານ ຫລື 100% ຂອງເງິນເສຍອົງຄະ ແບບສົມບູດຖານ.

## ໝວດທີ 11.
## ການອຸດໜູນ ເສຍອົງຄະ

**ມາດຕາ 96. ຜູ້ມີສິດໄດ້ຮັບເງິນອຸດໜູນເສຍອົງຄະ.**

ຜູ້ປະກັນຕົນ ທີ່ບໍ່ສາມາດສືບຕໍ່ປະຕິບັດໜ້າທີ່ວຽກງານຂອງຕົນ ອັນເນື່ອງມາຈາກສຸຂະພາບບໍ່ແຂງແຮງ ຫລືເສຍອົງຄະຫລື ອປສ ຫາກປະເມີນເຫັນວ່າ ຜູ້ກ່ຽວບໍ່ສາມາດອອກແຮງງານໄດ້, ຜູ້ກ່ຽວຈະມີສິດໄດ້ຮັບເງິນອຸດໜູນເສຍອົງຄະ.

**ມາດຕາ 97. ເງື່ອນໄຂ ໄດ້ຮັບເງິນອຸດໜູນເສຍອົງຄະ.**

ຜູ້ປະກັນຕົນຈະມີສິດໄດ້ຮັບເງິນອຸດໜູນເສຍອົງຄະໄດ້ ກໍຕໍ່ເມື່ອຜູ້ກ່ຽວໄດ້ຈ່າຍເງິນສົມທົບເຂົ້າກອງທຶນຢ່າງໜ້ອຍ 5 ປີມາແລ້ວ. ເມື່ອເຖິງອາຍຸ 60 ປີແລ້ວເງິນອຸດໜູນເສຍອົງຄະນີ້ຈະໄດ້ປ່ຽນເປັນເງິນອຸດໜູນບຳນານ ໂດຍມີຈຳນວນເງິນເທົ່າກັນ.

ຜູ້ທີ່ໄດ້ຮັບເງິນອຸດໜູນເສຍອົງຄະແລ້ວຈະບໍ່ມີສິດໄດ້ຮັບເງິນອຸດໜູນເຈັບປ່ວຍ ໃນກໍລະນີເຈັບປ່ວຍ ຫລື ເງິນອຸດໜູນ ອື່ນໆໃນຈຸດປະສົງດຽວກັນອີກ.

### ມາດຕາ 98. ການຄິດໄລ່ເງິນອຸດໜູນເສຍອົງຄະ.

ເງິນອຸດໜູນເສຍອົງຄະ ຈະຄິດໄລ່ຄືກັນກັບການຄິດໄລ່ເງິນບໍານານ.ແຕ່ຈໍານວນປີທີ່ຜູ້ກ່ຽວ ເສຍອົງຄະຈົນເຖິງອາຍຸບໍານານຈະຖືວ່າ ເປັນປີການປະກັນຕົນ. ນັບແຕ່ໄລຍະເລີ່ມເສຍອົງຄະ ຈົນເຖິງອາຍຸກະສຽນບໍານານນັ້ນຜູ້ປະກັນຕົນຈະໄດ້ຄະແນນບໍານານແຕ່ລະປີເທົ່າກັບຄະ ແນນບໍານານສະເລ່ຍໃນຊຸມປີກ່ອນ ການເສຍອົງຄະ.

### ມາດຕາ 99. ການອຸດໜູນຜູ້ ດູແລ.

ຜູ້ເສຍອົງຄະ ຊຶ່ງບໍ່ສາມາດເຄື່ອນໄຫວໄປມາດ້ວຍຕົວເອງໄດ້ ແລະມີຄວາມຈໍາເປັນທີ່ຕ້ອງມີຜູ້ດູແລເປັນປະຈໍາ, ຜູ້ດູແລນັ້ນຈະມີສິດໄດ້ຮັບການອຸດໜູນ ຕາມທີ່ໄດ້ກໍານົດຢູ່ໃນມາດຕາ 65 ຂອງດໍາລັດສະບັບນີ້.

### ມາດຕາ 100. ການກວດກາ ດ້ານ ການແພດ.

ກ່ອນຈະຮ້ອງຂໍເງິນອຸດໜູນເສຍອົງຄະ ຜູ້ປະກັນຕົນຈະຕ້ອງໄປກວດສຸຂະພາບນໍາທ່ານໝໍທີ່ໄດ້ກໍານົດໄວ້ເສຍກ່ອນ. ໃນກໍລະນີທີ່ມີຄວາມຈໍາເປັນຕ້ອງເຂົ້ານອນໂຮງໝໍເພື່ອຕິດຕາມ ແລະ ກວດພະຍາດ, ອປສ ຈະເປັນຜູ້ຮັບຜິດຊອບຄ່າໃຊ້ຈ່າຍ.

## ມາດຕາ 101. ການປິ່ນປົວ ດ້ານການແພດ.

ຖ້າມີການປິ່ນປົວທາງແພດ ທີ່ສາມາດຊ່ວຍໃຫ້ສຸຂະພາບຂອງຜູ້ເຈັບປ່ວຍດີຂຶ້ນ, ອປສ ກໍຈະເບີກຈ່າຍເງິນຄ່າບໍລິການປິ່ນປົວທາງແພດນັ້ນ.

ການປິ່ນປົວທາງການແພດ ອາດຈະຖືກປະຕິເສດໄດ້, ຖ້າການປິ່ນປົວດັ່ງກ່າວຫາກກໍ່ຄວາມເຈັບປວດ, ເປັນອັນຕະລາຍ ຫລື ມີຄວາມສ່ຽງໄພສູງຕໍ່ສຸຂະພາບ ຂອງ ຜູ້ປະກັນຕົນ.

ຖ້າຜູ້ປະກັນຕົນ ຫາກປະຕິເສດການປິ່ນປົວ ໂດຍບໍ່ມີເຫດຜົນ ເງິນອຸດໜູນ ເສຍອົງຄະຂອງຜູ້ກ່ຽວຈະຖືກຫລຸດລົງ ຫລື ຈະຖືກຢຸດຈ່າຍ.

## ມາດຕາ 102. ການຟື້ນຟູ ສຸຂະພາບ.

ຜູ້ເສຍອົງຄະທີ່ຈະມີສິດໄດ້ຮັບການອຸດໜູນຈາກ ອປສ ຕ້ອງໄດ້ຂຶ້ນທະບຽນແລະຟື້ນຟູສຸຂະພາບຢູ່ທີ່ສູນຟື້ນຟູຊຶ່ງ ອປສ ໄດ້ກຳນົດໄວ້. ຖ້າສູນທີ່ໄດ້ກຳນົດ ບໍ່ສາມາດຟື້ນຟູສຸຂະພາບຂອງຜູ້ປະກັນຕົນໄດ້, ອປສ ຈະສົ່ງໄປຮັບການຟື້ນຟູຢູ່ທີ່ສູນອື່ນ ຊຶ່ງເຫັນວ່າມີຄວາມສາມາດ. ຄ່າໃຊ້ຈ່າຍທັງໝົດໃຫ້ປະຕິບັດຕາມການກຳນົດຂອງ ອປສ. ຖ້າມີກໍລະນີປະຕິເສດການຟື້ນຟູ ໃຫ້ປະຕິບັດຄືກັນກັບ ມາດຕາ 101 ຂອງດຳລັດນີ້.

## ໝວດທີ 12.
## ກົດລະບຽບທົ່ວໄປກ່ຽວກັບ ການຄຸ້ມຄອງ ແລະ ເງິນອຸດໜູນ

### ມາດຕາ 103. ການກຳນົດເພດານຂອງຄ່າແຮງງານ ເພື່ອຄິດໄລ່ເປັນເງິນອຸດໜູນ.

ເພດານ ຂອງຄ່າແຮງງານປະກັນຕົນ ທີ່ຈະເອົາມາຄິດໄລ່ເປັນເງິນອຸດໜູນໃນແຕ່ລະໄລຍະແມ່ນສະພາບໍລິຫານ ຂອງອົງການປະກັນສັງຄົມ ເປັນຜູ້ກຳນົດ.

### ມາດຕາ 104. ການປັບ ອັດຕາເງິນອຸດໜູນ.

ຜູ້ອອກແຮງງານທີ່ໄດ້ຮັບການອຸດໜູນຈາກ ອປສ ແຕ່ໜຶ່ງປີຂຶ້ນໄປ, ການອຸດໜູນດັ່ງກ່າວຈະຖືກດັດແປງຕາມພາວະເໜັງຕີງ ຂອງ ລາຍຮັບສະເລ່ຍ ທີ່ໄດ້ຈ່າຍເປັນເງິນສົມທົບເຂົ້າ ກອງທຶນ ປະກັນສັງຄົມ.

### ມາດຕາ 105. ສິດໃນການຮັບເງິນອຸດໜູນ.

ບັນດາເປົ້າໝາຍ ທີ່ໄດ້ກຳນົດໄວ້ໃນ ດຳລັດ ສະບັບນີ້ມີສິດໄດ້ຮັບເງິນອຸດໜູນ ປະກັນສັງຄົມໄດ້ອັນດຽວແຕ່ມີສິດເລືອກເອົາການອຸດໜູນ ທີ່ສູງກວ່າໝູ່ໄດ້. ນອກຈາກນີ້ຍັງສາມາດໄດ້ຮັບເງິນທົດແທນ ຈາກແຫລ່ງອື່ນອີກ (ຖ້າມີ).

### ມາດຕາ 106. ກຳນົດເວລາ ແລະສິດໃນການຮັບເງິນອຸດໜູນ.

ຜູ້ປະກັນຕົນທີ່ຄົບເງື່ອນໄຂຕາມທີ່ໄດ້ກຳນົດໃນດຳລັດສະບັບນີ້ ແມ່ນມີສິດໄດ້ຮັບເງິນອຸດໜູນໂດຍທັນທີ. ຜູ້ປະກັນຕົນສາມາດຮ້ອງຂໍ

ເງິນອຸດໜູນຄືນຫລັງໄດ້, ແຕ່ມີຂອບເຂດຈຳກັດເຊັ່ນ: ສຳລັບອຸດໜູນໄລຍະສັ້ນແມ່ນສູງສຸດ 3 ເດືອນ ແລະອຸດໜູນໄລຍະຍາວແມ່ນສູງສຸດ 1 ປີ; ຖ້າກາຍກຳນົດເວລາດັ່ງກ່າວ ການຮ້ອງຂໍເງິນອຸດໜູນຍ້ອນຫລັງຈະບໍ່ໄດ້ຮັບ ການພິຈາລະນາ.

ຖ້າການຮ້ອງຂໍ ຫາກຊັກຊ້າຍ້ອນວ່າ ອປສ ຫລື ສາຂາ ອປສ ສະໜອງຂໍ້ມູນບໍ່ຄົບຖ້ວນຫລືຂໍ້ມູນຜິດພາດ, ອປສ ຕ້ອງຈ່າຍດອກເບ້ຍເພີ່ມຕາມອັດຕາກູ້ຢືມຂອງທະນາຄານນັບຕັ້ງແຕ່ມື້ທີ່ຜູ້ປະກັນຕົນມີສິດໄດ້ຮັບການອຸດໜູນເປັນຕົ້ນໄປ. ຖ້າການຊັກຊ້າດັ່ງກ່າວຫາກເກີດຂຶ້ນດ້ວຍເຫດຜົນອື່ນ ຫລື ຍ້ອນຜູ້ປະກັນຕົນເອງ, ອປສ ຈະບໍ່ຈ່າຍຄ່າດອກເບ້ຍໃຫ້.

### ມາດຕາ 107. ການຮ້ອງຂໍເງິນອຸດໜູນ.

ການຮ້ອງຂໍອາດຈະແມ່ນຜູ້ກ່ຽວເປັນຜູ້ຮ້ອງຂໍເອງ ຫລື ຜູ້ອື່ນໆທີ່ມີຫລັກຖານຢັ້ງຢືນການຮ້ອງຂໍແທນກໍໄດ້. ໃນເວລາທີ່ມີການຍື່ນຄຳຮ້ອງຂໍ ອປສ ຕ້ອງມີການຢັ້ງຢືນໃສ່ເອກະສານເພື່ອສະແດງໃຫ້ເຫັນວ່າການຮ້ອງຂໍນັ້ນແມ່ນຖືກຕ້ອງຕາມຫລັກການແລ້ວ.

### ມາດຕາ 108. ກຳນົດເວລາການໃຫ້ຄຳຕົກລົງ ແລະ ອຸດໜູນລ່ວງໜ້າ.

ເມື່ອໄດ້ຮັບຄຳຮ້ອງຂອງຜູ້ປະກັນຕົນແລ້ວ ອປສ ຕ້ອງໄດ້ພິຈາລະນາ ແລະ ຕົກລົງພາຍໃນ 1 ເດືອນ; ຖ້າພາຍໃນ 1 ເດືອນຫາກບໍ່ສາມາດຕົກລົງໄດ້ ອປສ ຕ້ອງອີງໃສ່ຂໍ້ມູນທີ່ມີແລ້ວເພື່ອ ເບີກຈ່າຍເງິນລ່ວງໜ້າໃຫ້ຜູ້ຮ້ອງຂໍ ສາກ່ອນ.

### ມາດຕາ 109. ການພິຈາລະນາ ຄຳຮ້ອງຂໍຄືນໃໝ່.

ເມື່ອຜູ້ຮ້ອງຂໍ ຫາກເຫັນວ່າເງິນອຸດໜູນທີ່ ອປສ ໄດ້ຕົກລົງຈ່າຍນັ້ນບໍ່ທັນເໝາະສົມກັບຕົວຈິງຜູ້ກ່ຽວມີສິດຍື່ນຮ້ອງຂໍຄືນໃໝ່. ຫລັງຈາກໄດ້ຮັບການຮ້ອງຂໍແລ້ວ ອປສ ຈະຕ້ອງຮັບພິຈາລະນາແລະ ຕົກລົງພາຍໃນກຳນົດເວລາ 1 ເດືອນ.

### ມາດຕາ 110. ການຮຽກເກັບເງິນອຸດໜູນຄືນ.

ໃນກໍລະນີທີ່ ອປສ ໄດ້ເບີກຈ່າຍເງິນອຸດໜູນແລ້ວ ແຕ່ມີການຜິດພາດແລະຜູ້ທີ່ໄດ້ຮັບການອຸດໜູນນັ້ນ ກໍບໍ່ຮູ້ວ່າຈຳນວນເງິນທີ່ຕົນໄດ້ຮັບນັ້ນບໍ່ຖືກກັບຕົວຈິງ, ອປສ ຈະບໍ່ມີສິດທວງຄືນເງິນທີ່ເບີກຈ່າຍໄປແລ້ວນັ້ນ.

ກໍລະນີ ຈຳນວນເງິນອຸດໜູນທີ່ ອປສ ໄດ້ຈ່າຍໄປນັ້ນຫາກມີການຜິດພາດເນື່ອງຈາກຜູ້ຮັບອຸດໜູນ ຫລື ຜູ້ໃຫ້ການບໍລິການປິ່ນປົວຊຶ່ງມີເຈດຕະນາກະທຳຜິດໃນການຈ່າຍອຸດໜູນ ອປສ ຈະຮຽກເກັບຈຳນວນເງິນທີ່ເກີນ ຫລື ຜິດພາດນັ້ນຄືນພາຍໃນເວລາ 2 ປີ.

### ມາດຕາ 111. ການຈັດຕັ້ງໜ່ວຍກວດກາ.

ອປສ ມີໜ້າທີ່ສ້າງຕັ້ງໜ່ວຍງານກວດກາຂຶ້ນໃນອົງການຂອງຕົນ; ໜ່ວຍງານນີ້ມີໜ້າທີ່ກວດກາ ແລະ ປະສານງານກັບພາກສ່ວນທີ່ກ່ຽວ ຂ້ອງເພື່ອຈັດຕັ້ງປະຕິບັດດຳລັດສະບັບນີ້.

### ມາດຕາ 112. ສິດ ແລະ ອຳນາດ ຂອງພະນັກງານກວດກາ.

ພະນັກງານກວດກາຂອງ ອປສ ມີສິດ ແລະ ໜ້າທີ່ເຂົ້າໄປກວດກາບັນດາວິສາຫະກິດຕ່າງໆໄດ້ທຸກເວລາ, ມີສິດສອບສວນ ບັນທຶກເຮັດສຳເນົາຂໍ້ມູນທັງໝົດ ໂດຍບໍ່ມີການເຄື່ອນຍ້າຍຂໍ້ມູນໃດໆ, ມີສິດສອບຖາມ

ບຸກຄົນ ເພື່ອກວດສອບເບິ່ງ ຄວາມຖືກຕ້ອງ ຂອງ ການປະຕິບັດ ດຳລັດສະບັບນີ້.

ຖ້າວ່າວິສາຫະກິດໃດ ຫາກບໍ່ອະນຸຍາດໃຫ້ພະນັກງານກວດກາເຂົ້າປະຕິບັດໜ້າທີ່, ພະນັກງານກວດກາມີສິດຂໍອະນຸຍາດຈາກເຈົ້າໜ້າທີ່ກ່ຽວຂ້ອງ.

### ມາດຕາ 113. ມາດຕະການໃນການປະຕິບັດ ການກວດກາ.

ພະນັກງານ ກວດກາຈະອອກໃບເຕືອນໃຫ້ແກ່ບຸກຄົນ, ວິສາຫະກິດຫລືສະຖາບັນທີ່ກ່ຽວຂ້ອງ ໂດຍມີການກຳນົດເວລາອັນແນ່ນອນ ເພື່ອໃຫ້ເຂົາເຈົ້າປະຕິບັດ ຕາມດຳລັດສະບັບນີ້ຢ່າງຖືກຕ້ອງ.

ໃນກໍລະນີທີ່ບໍ່ປະຕິບັດຄຳເຕືອນ, ບໍ່ປະຕິບັດຕາມເວລາທີ່ໄດ້ກຳນົດ,ຫລືມີການລະເມີດຕື່ມອີກ ພະນັກງານກວດກາຈະໄດ້ບັນທຶກຄວາມຜິດດັ່ງກ່າວຢ່າງເປັນທາງການແລ້ວສົ່ງໃຫ້ ອປສ.

ຖ້າວ່າການລະເມີດຫາກ ເປັນການກະທຳ ຜິດທາງອາຍາ, ອປສ ຈະສົ່ງບົດບັນທຶກນັ້ນ ໃຫ້ອົງການທີ່ກ່ຽວຂ້ອງ ເພື່ອດຳເນີນຕາມລະບຽບກົດໝາຍ ແລະ ພ້ອມນັ້ນກໍຕອ້ງເອົາສຳເນົາບົດບັນທຶກດັ່ງກ່າວສົ່ງໃຫ້ຜູ້ລະເມີດດ້ວຍພາຍໃນກຳນົດ 7 ວັນ.

## ໝວດທີ 13.
## ການໄກ່ເກ່ຍ ຂໍ້ຂັດແຍ່ງ

### ມາດຕາ 114. ຂັ້ນຕອນ ຂອງ ການໄກ່ເກ່ຍ.

ຜູ້ປະກັນຕົນທີ່ບໍ່ເຫັນດີຕາມຄຳຕົກລົງຂອງ ອປສ ມີສິດຍື່ນຄຳຮ້ອງຕໍ່ໜ່ວຍໄກ່ເກ່ຍ ຊຶ່ງຈະຕ້ອງຮັບພິຈາລະນາພາຍໃນກຳນົດ 15 ວັນ. ຖ້າຝ່າຍໃດຝ່າຍໜຶ່ງ ຫາກ ບໍ່ເຫັນດີຕາມການໄກ່ເກ່ຍ ກໍມີສິດຮ້ອງຟ້ອງ ຕໍ່ສານປະຊາຊົນ.

# ໝວດທີ 14.
# ບົດບັນຍັດສຸດທ້າຍ

**ມາດຕາ 115.** ກະຊວງແຮງງານ ແລະ ສະຫວັດດີການສັງຄົມ ແລະສະພາບໍລິຫານອົງການປະກັນສັງຄົມມີຄວາມຮັບຜິດຊອບໃນ ການແນະນຳ ແລະ ຈັດຕັ້ງປະຕິບັດດຳລັດສະບັບນີ້.

**ມາດຕາ 116.** ບັນດາກະຊວງ, ອົງການທຽບເທົ່າ, ເຈົ້າແຂວງ, ເຈົ້າຄອງກຳແພງນະຄອນ, ບັນດາວິສາຫະກິດຕ່າງໆ ແລະ ທຸກພາກສ່ວນທີ່ກ່ຽວຂ້ອງຕ້ອງຮັບຮູ້ ແລະ ປະຕິບັດຕາມດຳລັດສະບັບນີ້ຢ່າງເຂັ້ມງວດ.

**ມາດຕາ 117.** ດຳລັດສະບັບນີ້ ມີຜົນສັກສິດນັບຕັ້ງແຕ່ ວັນທີ 1 ເດືອນກໍລະກົດ (7) ປີ 2000 ເປັນຕົ້ນໄປ. ບັນດາດຳລັດ,ຂໍ້ກຳນົດ,ກົດລະບຽບທີ່ໄດ້ປະກາດໃຊ້ໃນເມື່ອກ່ອນ ທີ່ຂັດກັບດຳລັດສະບັບນີ້ ລ້ວນແຕ່ຖືກຍົກເລີກ.

ວຽງຈັນ, ວັນທີ 23 ທັນວາ 1999.

ນາຍົກລັດຖະມົນຕີແຫ່ງ ສປປ ລາວ



ສີສະຫວາດ **ແກ້ວບຸນພັນ**

ພິມທີ່ໂຮງພິມໜຸ່ມລາວ ໂທ: 021 242578, 21 5721; ແຟັກ: 021 216338